ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 2 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍ

## ການດຳເນີນຄະດີແພ່ງ ສະບັບປັບປຸງ

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝ ສາມັນເທື່ອທີ່ 5 ຂອງສະພາແຫ່ງຊາດຊຸດທີ່ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນການປັບປຸງຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 15 ພຶດສະພາ 2004.

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1:</u> ຮັບຮອງເອົາກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ,

<u>ມາດຕາ 2:</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 15 ພຶດສະພາ 2004

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 35 /ສປປ

# ລັດຖະດຳລັດ
# ຂອງປະທານປະເທດ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງ ຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02 /ສພຊ, ລົງວັນທີ 15 ພຶດສະພາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ ຄປຈ, ລົງວັນທີ 24 ພຶດສະພາ 20004

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

**ມາດຕາ 1:** ປະກາດໃຊ້ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ.

**ມາດຕາ 2:** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 14 ມິຖຸນາ 2004

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ສະພາແຫ່ງຊາດ ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2004

# ກົດໝາຍ
# ວ່າດ້ວຍການດຳເນີນຄະດີແພ່ງ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງກຳນົດຫລັກການ, ລະບຽບການ ແລະມາດຕະການຂອງການດຳເນີນຄະດີ ເພື່ອແກ້ໄຂຂໍ້ຂັດແຍ່ງທາງແພ່ງ, ການຄ້າ, ຄອບຄົວ ແລະເດັກ ຢ່າງລະອຽດ, ຖືກຕ້ອງຕາມຄວາມເປັນຈິງ, ຖືກຕ້ອງຕາມກົດໝາຍ ແລະຍຸຕິທຳ ແນໃສ່ປົກປັກຮັກສາລະບອບເສດຖະກິດ ແລະສັງຄົມ, ປົກປ້ອງກຳມະສິດຂອງລັດ, ລວມໝູ່, ສິດ ແລະຜົນປະໂຫຍດອັນຊອບທຳຂອງອົງການຈັດຕັ້ງ, ວິສາຫະກິດ ແລະພົນລະເມືອງ, ເພີ່ມທະວີນິຕິທຳ, ກຳຈັດ ແລະສະກັດກັ້ນການລະເມີດກົດຫມາຍ, ສຶກສາອົບຮົມໃຫ້ພົນລະເມືອງເຄົາລົບ ແລະປະຕິບັດກົດຫມາຍຢ່າງເຂັ້ມງວດ, ສ້າງເງື່ອນໄຂໃຫ້ພົນລະເມືອງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ.

**ມາດຕາ 2 ການດຳເນີນຄະດີແພ່ງ**

ການດຳເນີນຄະດີແພ່ງ ແມ່ນການເຄື່ອນໄຫວຂອງສານ ແລະຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະຂໍ້ຂັດແຍ່ງອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 3 ສິດໃນການຮ້ອງຟ້ອງ ແລະການຮ້ອງຂໍຕໍ່ສານ**

ບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດໃດໜຶ່ງ ມີສິດຮ້ອງຟ້ອງຕໍ່ສານ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງຕົນທີ່ຖືກລະເມີດ ຫລືຖືກໂຕ້ແຍ່ງຈາກຜູ້ອື່ນ.

ບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດໃດໜຶ່ງ ມີສິດຮ້ອງຂໍຕໍ່ສານ ເພື່ອພິຈາລະນາບັນຫາໃດໜຶ່ງ ຊຶ່ງບໍ່ເປັນຂໍ້ຂັດແຍ່ງເຊັ່ນ: ການປະກາດເປັນຜູ້ເສັຍຊີວິດ, ການຫາຍສາບສູນ ແລະອື່ນໆ.

**ມາດຕາ 4 ສາເຫດທີ່ພາໃຫ້ມີການດຳເນີນຄະດີ**

ສານ ຈະດຳເນີນຄະດີ ໄດ້ກໍຕໍ່ເມື່ອມີສາເຫດດັ່ງນີ້:

1. ມີຄຳຮ້ອງຟ້ອງຂອງບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງຕົນ;
2. ມີຄຳຮ້ອງຂໍຂອງບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດ ເພື່ອພິຈາລະນາບັນຫາໃດໜຶ່ງ;
3. ມີຄຳຮ້ອງຟ້ອງຂອງອົງການຈັດຕັ້ງ, ວິສາຫະກິດ ຫລືຂອງບຸກຄົນຜູ້ໃດຜູ້ໜຶ່ງທີ່ກົດໝາຍອະນຸຍາດໃຫ້ປົກປ້ອງສິດ ແລະຜົນປະໂຫຍດຂອງຜູ້ອື່ນ;
4. ມີຄຳຮ້ອງຟ້ອງຂອງໄອຍະການປະຊາຊົນ ເພື່ອປົກປ້ອງຜົນປະໂຫຍດຂອງລັດ ຫລືສັງຄົມ.

**ມາດຕາ 5 ສິດແລະພັນທະຂອງສານໃນການຕັດສິນຄະດີ**

ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີ ບົນພື້ນຖານການເຄົາລົບກົດໝາຍຢ່າງເຂັ້ມງວດ.

ເມື່ອມີສາເຫດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້ ສານຕ້ອງໄດ້ພິຈາລະນາໄກ່ເກ່ຍ ຫລືຕັດສິນ.

**ມາດຕາ 6 ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະສານ**

ການດຳເນີນຄະດີແພ່ງ ຕ້ອງປະຕິບັດບົນພື້ນຖານແຫ່ງຄວາມສະເໝີພາບຂອງພົນລະເມືອງທຸກຄົນຕໍ່ໜ້າກົດໝາຍ ແລະສານ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະອື່ນໆ.

ສານປະຊາຊົນ ຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງ ໂດຍສະເພາະຄູ່ຄວາມໃນຄະດີແພ່ງ ໄດ້ປະຕິບັດສິດສະເໝີພາບດັ່ງກ່າວ ເພື່ອຮັບປະກັນໃຫ້ການດຳເນີນຄະດີ ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະພາວະວິໄສ.

**ມາດຕາ 7 ການພິຈາລະນາຄະດີເປັນໝູ່ຄະນະ**

ຄະນະສານຕັດສິນຂອງສານປະຊາຊົນສູງສຸດ, ສານອຸທອນ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເມືອງ, ເທດສະບານ ປະກອບດ້ວຍຜູ້ພິພາກສາສາມຄົນ, ໃນນັ້ນ ຜູ້ໜຶ່ງເປັນປະທານ ແລະອີກສອງຄົນ ເປັນຄະນະ.

ມີແຕ່ຜູ້ພິພາກສາທີ່ຖືກແຕ່ງຕັ້ງຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນ ຈຶ່ງມີສິດປະກອບເຂົ້າເປັນຄະນະສານຕັດສິນໄດ້.

ຄຳຕົກລົງຂອງຄະນະສານຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ.

**ມາດຕາ 8 ຄວາມເປັນເອກະລາດຂອງຜູ້ພິພາກສາ**

ໃນການພິຈາລະນາຕັດສິນຄະດີ ຜູ້ພິພາກສາຕ້ອງເປັນເອກະລາດ ແລະມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 9 ພາສາທີ່ໃຊ້ໃນການດຳເນີນຄະດີ**

ໃນການດຳເນີນຄະດີ ໃຫ້ໃຊ້ພາສາລາວ.

ຜູ້ເຂົ້າຮ່ວມໃນຄະດີທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ຫລືພາສາອື່ນ ໂດຍຜ່ານການແປພາສາ.

**ມາດຕາ 10 ການໄຕ່ສວນຄະດີໃນທີ່ປະຊຸມສານຢ່າງເປີດເຜີຍ**

ການໄຕ່ສວນຄະດີໃນທີ່ປະຊຸມສານຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສັຍແຕ່ກໍລະນີທີ່ຄະດີຫາກ ກ່ຽວຂ້ອງກັບຄວາມລັບຂອງລັດ ຫລືຂອງສັງຄົມ ເປັນຕົ້ນສາຍພົວພັນຄອບຄົວທີ່ແຕະຕ້ອງເຖິງຊີວິດສ່ວນຕົວຂອງຜົວ ຫລືເມຍນັ້ນ ຕ້ອງດຳເນີນຢ່າງປິດລັບ.

ການອ່ານຄຳຕັດສິນຂອງສານ ບໍ່ວ່າໃນກໍລະນີໃດຕ້ອງດຳເນີນຢ່າງເປີດເຜີຍ.

**ມາດຕາ 11 ຜົນສັກສິດຂອງຄຳຕົກລົງຂອງສານ**

ສານປະຊາຊົນ ອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານ ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະພົນລະເມືອງທຸກຄົນຕ້ອງເຄົາລົບ; ບຸກຄົນ ແລະອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 85 ຂອງລັດຖະທຳມະນູນ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ບໍ່ສາມາດປ່ຽນແປງໄດ້ແຕ່ຢ່າງໃດ ເວັ້ນເສັຍແຕ່ໃນກໍລະນີທີ່ມີການຮື້ຟື້ນຄະດີ.

**ມາດຕາ 12 ການບໍ່ອະນຸຍາດໃຫ້ເຂົ້າຮ່ວມ ໃນການພິຈາລະນາຄະດີດຽວກັນເປັນຄັ້ງທີສອງ**

ຜູ້ພິພາກສາ ທີ່ໄດ້ເຂົ້າຮ່ວມໃນການພິຈາລະນາຄະດີແພ່ງຄັ້ງໜຶ່ງແລ້ວ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຄະດີດຽວກັນ ເປັນຄັ້ງທີສອງອີກ ບໍ່ວ່າຢູ່ສານຂັ້ນໃດ ເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 13 ການດໍາເນີນຄະດີຮອບດ້ານ, ຄົບຖ້ວນ ແລະພາວະວິໄສ**

ສານ ຕ້ອງນໍາໃຊ້ບັນດາມາດຕະການທີ່ໄດ້ບົ່ງໄວ້ໃນກົດໝາຍ ເພື່ອໃຫ້ການດໍາເນີນຄະດີຮອບດ້ານ, ຄົບຖ້ວນ, ພາວະວິໄສ ແນໃສ່ເຮັດໃຫ້ຄະດີແຈ້ງຂາວ, ຊັດເຈນ ສາມາດກໍານົດເຫດການຂອງຄະດີໄດ້ຢ່າງຖືກຕ້ອງຕາມຄວາມເປັນຈິງ ແລະນໍາໃຊ້ກົດໝາຍໃຫ້ຖືກຕ້ອງ.

ສານ ຕ້ອງແຈ້ງສິດ ແລະພັນທະຂອງຄູ່ຄວາມ, ເຕືອນ ແລະແນະນໍາໃຫ້ຄູ່ຄວາມປະຕິບັດຕາມ ທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 14 ການຂໍຖອນຕົວ ແລະການຄ້ານຕົວ**

ຖ້າຜູ້ພິພາກສາ, ໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ ຫາກເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫລືມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຕ້ອງຂໍຖອນຕົວອອກຈາກການດໍາເນີນຄະດີນັ້ນ.

ຖ້າຜູ້ກ່ຽວຫາກບໍ່ຍອມຖອນຕົວອອກ ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ກໍມີສິດສະເໜີຄ້ານຕົວຜູ້ກ່ຽວອອກຈາກການດໍາເນີນຄະດີ.

**ມາດຕາ 15 ສາເຫດທີ່ພາໃຫ້ມີການຂໍຖອນຕົວ ຫລືຄ້ານຕົວຜູ້ພິພາກສາ**

ຜູ້ພິພາກສາ ຈະຕ້ອງຂໍຖອນຕົວ ຫລືຈະຖືກຄ້ານຕົວໃນກໍລະນີ ດັ່ງນີ້:

1. ຖ້າຫາກໄດ້ເຂົ້າຮ່ວມໃນການດໍາເນີນຄະດີນັ້ນກ່ອນແລ້ວໃນຖານະເປັນພະຍານ, ຜູ້ຊ່ຽວຊານ, ໄອຍະການປະຊາຊົນ, ຈ່າສານ;
2. ຖ້າຫາກເປັນຍາດພີ່ນ້ອງ, ໝູ່ຄູ່ຮັກແພງຂອງຄູ່ຄວາມໃນຄະດີ;
3. ຖ້າຫາກມີຜົນປະໂຫຍດໃນຄະດີນັ້ນ ຈະແມ່ນໂດຍກົງ ຫລືທາງອ້ອມກໍຕາມ;
4. ຖ້າຫາກເປັນຍາດໃກ້ຊິດກັບຄະນະສານຕັດສິນຜູ້ໃດຜູ້ໜຶ່ງ.

## ພາກທີ II
## ຫລັກຖານໃນຄະດີ

### ມາດຕາ 16 ຫລັກຖານ

ຫລັກຖານໃນຄະດີ ແມ່ນບັນດາຂໍ້ມູນທີ່ຊ່ວຍໃຫ້ສານສາມາດ ກຳນົດເຫດການທີ່ພາໃຫ້ມີການຮ້ອງຟ້ອງ, ການແກ້ຟ້ອງ ຫລືຟ້ອງແຍ່ງ ແລະເຫດການອື່ນ ທີ່ມີຄວາມໝາຍສຳຄັນເພື່ອເປັນບ່ອນອີງໃຫ້ແກ່ສານໃນການຕັດສິນຄະດີຢ່າງຖືກຕ້ອງ.

### ມາດຕາ 17 ປະເພດຫລັກຖານ

ຫລັກຖານໃນຄະດີແພ່ງ, ການຄ້າ, ຄອບຄົວ ແລະເດັກ ປະກອບດ້ວຍ:

- ຫລັກຖານທາງດ້ານວັດຖຸ;
- ຫລັກຖານທາງດ້ານເອກະສານ;
- ຫລັກຖານທາງດ້ານບຸກຄົນ.

ຫລັກຖານທາງດ້ານວັດຖຸ ແມ່ນໄດ້ມາຈາກວັດຖຸສິ່ງຂອງທີ່ພົວພັນກັບຂໍ້ຂັດແຍ່ງເຊັ່ນ: ພາຫະນະ, ຮົ້ວ, ຜົນລະປູກ ແລະອື່ນໆ.

ຫລັກຖານທາງດ້ານເອກະສານ ແມ່ນໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ, ບັນຊີຊັບສິນ ແລະເອກະສານອື່ນໆ ທີ່ພົວພັນກັບຂໍ້ຂັດແຍ່ງ.

ຫລັກຖານທາງດ້ານບຸກຄົນ ແມ່ນໄດ້ມາຈາກຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການ ແລະການຢັ້ງຢືນຂອງພະຍານ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີອື່ນໆ ທີ່ພົວພັນກັບຂໍ້ຂັດແຍ່ງ.

### ມາດຕາ 18 ຫລັກຖານທີ່ເປັນເອກະສານ ຫລືວັດຖຸ

ບຸກຄົນຜູ້ທີ່ສະເໜີຫລັກຖານດ້ວຍຕົນເອງ ຫລືສະເໜີໃຫ້ສານທວງເອົາຫລັກຖານໃດໜຶ່ງ ຊຶ່ງເປັນເອກະສານ ຫລືວັດຖຸນັ້ນ ມີພັນທະຊີ້ແຈງກ່ຽວກັບເຫດການ ຫລືທີ່ມາຂອງຫລັກຖານ ເພື່ອເປັນບ່ອນອີງໃນການພິຈາລະນາຄະດີຂອງສານ.

ຖ້າວ່າຫລັກຖານທາງດ້ານເອກະສານ ຫລືວັດຖຸທີ່ກ່ຽວຂ້ອງກັບຄະດີນັ້ນ ຫາກໄດ້ມາຈາກບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດ ທີ່ບໍ່ໄດ້ເຂົ້າຮ່ວມໃນຄະດີແລ້ວ ຫລັກຖານດັ່ງກ່າວກໍຈະຖືກສົ່ງຄືນ ແຕ່ສານຕ້ອງໄດ້ສຳເນົາເອກະສານດັ່ງກ່າວໄວ້ໃນສຳນວນຄະດີ.

### ມາດຕາ 19 ຄຳໃຫ້ການຂອງຄູ່ຄວາມ ແລະບຸກຄົນທີສາມ

ຄຳໃຫ້ການຂອງຄູ່ຄວາມ ແລະບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີ ຈະຖືກກວດກາ ແລະຕີລາຄາ ພ້ອມກັນກັບຫລັກຖານທີ່ເກັບກຳໄດ້ໃນຄະດີ.

ເຫດການ ຫລືຂໍ້ມູນ ຊຶ່ງຄູ່ຄວາມອ້າງຂຶ້ນເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ ຫລືຄຳຟ້ອງແຍ່ງຂອງຕົນນັ້ນ ສານນຳໃຊ້ດຸນພິນິດຂອງຕົນ ເພື່ອພິຈາລະນາຕາມຄວາມເປັນຈິງ. ສານຈະຖືວ່າເຫດການ ຫລືຂໍ້ມູນນັ້ນເປັນຄວາມຈິງໄດ້ກໍຕໍ່ເມື່ອ ສານຫາກເຊື່ອວ່າຄຳກ່າວອ້າງຂອງຄູ່ຄວາມຖືກຕ້ອງຕາມເຫດການຕົວຈິງຂອງຄະດີ.

**ມາດຕາ 20 ພັນທະໃນການສະເໜີ ແລະການປະກອບຫລັກຖານຂອງຄູ່ຄວາມ**

ຄູ່ຄວາມແຕ່ລະຝ່າຍມີພັນທະສະເໜີ ແລະປະກອບຫລັກຖານໃນຄະດີ.

ໂຈດ ມີພັນທະສະເໜີຫລັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງຂອງຕົນ.

ຈຳເລີຍ ມີພັນທະສະເໜີຫລັກຖານທຸກຢ່າງເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳແກ້ຟ້ອງ ຫລືຄຳຟ້ອງແຍ່ງຂອງຕົນ.

ກ່ອນສານຈະຮັບຄຳຮ້ອງຟ້ອງຂອງໂຈດມາພິຈາລະນານັ້ນ ສານຈະກວດກາເບິ່ງວ່າໂຈດມີຫລັກຖານໜັກແໜ້ນສົມຄວນ ຫລືບໍ່ ຖ້າວ່າບໍ່ມີແລ້ວ ສານຈະແນະນຳໃຫ້ໂຈດຊອກຫາຫລັກຖານມາປະກອບ, ຖ້າຫາກບໍ່ມີຫລັກຖານອັນໃດແລ້ວ ສານກໍຈະບໍ່ພິຈາລະນາໃຫ້.

ຖ້າວ່າຫລັກຖານທີ່ໂຈດ ຫລືຈຳເລີຍສະເໜີນັ້ນ ຫາກບໍ່ພຽງພໍແລ້ວ ສານກໍຈະແນະນຳໃຫ້ຄູ່ຄວາມຊອກຫາຫລັກຖານເພີ່ມເຕີມ ຫລືສານຈະລົງເກັບກຳຫລັກຖານຢູ່ຮາກຖານດ້ວຍຕົນເອງ ຫລືຕາມການສະເໜີຂອງຄູ່ຄວາມກໍໄດ້.

**ມາດຕາ 21 ການມອບໝາຍຂອງສານ**

ໃນກໍລະນີທີ່ມີຄວາມຈຳເປັນໃຫ້ແກ່ການເກັບກຳຫລັກຖານຢູ່ແຂວງ, ນະຄອນ ຫລືເມືອງ, ເທດສະບານອື່ນ ສານທີ່ພິຈາລະນາຄະດີນັ້ນ ມີສິດມອບໝາຍໃຫ້ສານປະຊາຊົນແຂວງ, ນະຄອນ ຫລື ເມືອງ, ເທດສະບານອື່ນທີ່ກ່ຽວຂ້ອງ ເປັນຜູ້ດຳເນີນການເກັບກຳຫລັກຖານໃຫ້ຕົນ.

ໃນຄຳສະເໜີກ່ຽວກັບການມອບຫມາຍຂອງສານນັ້ນ ຕ້ອງບອກເຖິງເນື້ອໃນຂອງຄະດີໂດຍຫຍໍ້ ແລະຫລັກຖານ ຊຶ່ງສານທີ່ຖືກມອບໝາຍນັ້ນຄວນເກັບກຳ. ຄຳສະເໜີນີ້ມີຜົນບັງຄັບປະຕິບັດ ສຳລັບສານທີ່ຖືກມອບໝາຍເທົ່ານັ້ນ ແລະໃຫ້ປະຕິບັດພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີດັ່ງກ່າວເປັນຕົ້ນໄປ.

ບົດບັນທຶກ ແລະຫລັກຖານທີ່ເກັບກຳໄດ້ທັງໝົດ ຕ້ອງສົ່ງໃຫ້ສານທີ່ພິຈາລະນາຄະດີນັ້ນໃນທັນໃດ.

**ມາດຕາ 22 ການກວດກາ ແລະຕີລາຄາຫລັກຖານ**

ສານ ຕ້ອງກວດກາ, ຊັ່ງຊາຕີລາຄາຫລັກຖານດ້ວຍຄວາມໝັ້ນໃຈຂອງຕົນ ບົນພື້ນຖານການພິຈາລະນາເຫດການຂອງຄະດີທັງໝົດຢ່າງຮອບດ້ານ, ຄົບຖ້ວນ ແລະພາວະວິໄສ.

ຫລັກຖານຈະມີຄຸນຄ່າໃຊ້ໄດ້ ກໍຕໍ່ເມື່ອສານໄດ້ກວດກາ, ຕີລາຄາ ແລະຮັບຮູ້ແລ້ວເທົ່ານັ້ນ.

# ພາກທີ III
# ການເຂົ້າຮ່ວມໃນການດໍາເນີນຄະດີ
## ໝວດທີ 1
## ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ

### ມາດຕາ 23 ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ

ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ມີ:

- ຄູ່ຄວາມ;
- ບຸກຄົນທີສາມ;
- ພະຍານ;
- ຜູ້ຊ່ຽວຊານ;
- ຜູ້ແປພາສາ;
- ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ;
- ໄອຍະການປະຊາຊົນ.

### ມາດຕາ 24 ຄູ່ຄວາມໃນຄະດີ

ຄູ່ຄວາມໃນຄະດີ ແມ່ນໂຈດ ແລະຈໍາເລີຍ.

ໂຈດ ແມ່ນບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດທີ່ຍື່ນຄໍາຮ້ອງຟ້ອງຕໍ່ສານວ່າ ສິດຂອງຕົນໄດ້ຖືກຜູ້ອື່ນລະເມີດ ຫລືໂຕ້ແຍ່ງ.

ຈໍາເລີຍ ແມ່ນບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດທີ່ຖືກຮ້ອງຟ້ອງວ່າ ໄດ້ລະເມີດ ຫລືໂຕ້ແຍ່ງສິດຂອງຜູ້ອື່ນ.

### ມາດຕາ 25 ສິດ ແລະພັນທະຂອງຄູ່ຄວາມ

ຄູ່ຄວາມມີສິດເທົ່າທຽມກັນໃນການດໍາເນີນຄະດີ.

ຄູ່ຄວາມ ມີສິດດັ່ງນີ້:

1. ຍື່ນຄໍາຮ້ອງຟ້ອງ, ຄໍາແກ້ຟ້ອງ ຫລືຄໍາຟ້ອງແຍ່ງ;
2. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ແລະຜູ້ແປພາສາ;

3. ສະເໜີຫລັກຖານ, ຂໍໄກ່ເກ່ຍ, ເຂົ້າຮ່ວມຊ້ອງໜ້າໃນການສອບສວນ ແລະຄົ້ນຄວ້າຫລັກຖານ;
4. ຊັກຖາມບຸກຄົນອື່ນທີ່ເຂົ້າຮ່ວມໃນຄະດີ;
5. ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫລືກ່າຍເອົາເນື້ອໃນເອກະສານທີ່ຈຳເປັນອອກຈາກສຳນວນຄະດີ;
6. ເອົາທະນາຍຄວາມ ຫລືຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;
7. ໃຫ້ການກ່ຽວກັບຄະດີທາງປາກເປົ່າ ຫລືເປັນລາຍລັກອັກສອນ;
8. ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລືຄຳພິພາກສາຂອງສານ;
9. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງຜູ້ພິພາກສາທີ່ຕົນເຫັນວ່າບໍ່ຖືກຕ້ອງ;
10. ທວງໃຫ້ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

**ຄູ່ຄວາມ ມີພັນທະດັ່ງນີ້:**

1. ຕ້ອງເຂົ້າມາສະເໜີຕົວດ້ວຍຕົນເອງ ຫລືໃຫ້ຜູ້ຕາງໜ້າເຂົ້າມາ ຕາມໝາຍຮຽກຂອງສານ;
2. ປະຕິບັດຕາມຄຳສັ່ງຂອງສານ ແລະລະບຽບໃນທີ່ປະຊຸມສານ;
3. ນຳໃຊ້ສິດຂອງຕົນໃນການດຳເນີນຄະດີ ດ້ວຍຄວາມບໍລິສຸດໃຈ;
4. ຕ້ອງຊອກຫາຫລັກຖານມາຢັ້ງຢືນເຫດການ ຊຶ່ງຕົນຖືເປັນບ່ອນອີງໃນການຮ້ອງຟ້ອງ, ແກ້ຟ້ອງ ຫລືຟ້ອງແຍ່ງ ເພື່ອທຳການຄັດຄ້ານ ຫລືຕອບໂຕ້ກັນ.

ໃນການປົກປ້ອງສິດ ແລະຜົນປະໂຫຍດຂອງຄູ່ຄວາມທີ່ມີອາຍຸຕ່ຳກວ່າ ສິບແປດປີ ຫລືເປັນຄົນເສັຍຈິດນັ້ນ ຕ້ອງໃຫ້ມີຜູ້ຕາງໜ້າຕາມກົດໝາຍເຂົ້າຮ່ວມນຳອີກ.

### ມາດຕາ 26 ການປ່ຽນແປງເປົ້າໝາຍຂອງຄຳຮ້ອງຟ້ອງ, ການຖອນຄຳຮ້ອງຟ້ອງ, ການຮັບຮູ້ຄຳຮ້ອງຟ້ອງ, ການຕົກລົງກັນໂດຍດີ

ໂຈດ ມີສິດປ່ຽນແປງເປົ້າໝາຍຂອງຄຳຮ້ອງຟ້ອງ, ເພີ່ມ ຫລືຫຼຸດມູນຄ່າໃນຄຳຮ້ອງຟ້ອງ ຫລື ຖອນຄຳຮ້ອງຟ້ອງ. ຈຳເລີຍມີສິດຮັບຮູ້ຄຳຮ້ອງຟ້ອງ. ຄູ່ຄວາມສາມາດເຮັດໃຫ້ຄະດີສິ້ນສຸດລົງດ້ວຍການຕົກລົງກັນໂດຍດີ.

ສານບໍ່ອະນຸຍາດໃຫ້ໂຈດຖອນຄຳຮ້ອງຟ້ອງ, ບໍ່ອະນຸຍາດໃຫ້ຈຳເລີຍຮັບຮູ້ຄຳຮ້ອງຟ້ອງຂອງໂຈດ ແລະບໍ່ອະນຸຍາດໃຫ້ຄູ່ຄວາມຕົກລົງກັນໂດຍດີໄດ້ ຖ້າວ່າການຖອນ, ການຮັບຮູ້ ແລະການຕົກລົງນັ້ນ ຫາກຂັດກັບກົດໝາຍ ແລະລະເມີດຜົນປະໂຫຍດຂອງລັດ ຫລືສັງຄົມ ຫລືສິດ ແລະຜົນປະໂຫຍດຂອງບຸກຄົນອື່ນ.

ຄຳຮ້ອງຟ້ອງນັ້ນ ຈະຍື່ນດ້ວຍໂຈດຜູ້ດຽວ ຫລືຮ່ວມກັນຫລາຍຄົນກໍໄດ້ ຫລືຈະຍື່ນຟ້ອງຈຳເລີຍຜູ້ດຽວ ຫລືຈຳເລີຍຫລາຍຄົນກໍໄດ້. ໂຈດ ຫລືຈຳເລີຍແຕ່ລະຄົນ ຕ້ອງເຂົ້າຮ່ວມໃນການດຳເນີນຄະດີດ້ວຍຕົນເອງ, ໃນກໍລະນີຈຳເປັນ ຈະມອບໝາຍໃຫ້ບຸກຄົນຜູ້ໃດຜູ້ໜຶ່ງ ເຂົ້າຮ່ວມແທນກໍໄດ້.

**ມາດຕາ 27 ການສືບຕໍ່ແທນຕົວໃນການດຳເນີນຄະດີ**

ສານ ຈະອະນຸຍາດໃຫ້ມີການສືບຕໍ່ແທນຄູ່ຄວາມຝ່າຍໃດຝ່າຍໜຶ່ງ ໃນກໍລະນີດັ່ງນີ້:

1. ຄູ່ຄວາມໄດ້ເສຍຊີວິດ;
2. ນິຕິບຸກຄົນທີ່ເປັນຄູ່ຄວາມນັ້ນໄດ້ຖືກຍຸບເລີກ ຫລືລົ້ມລະລາຍ;
3. ໂຈດ ຫລືຈຳເລີຍໄດ້ມອບສິດ ຫລືພັນທະໃຫ້ບຸກຄົນອື່ນປະຕິບັດແທນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ.

ການສືບຕໍ່ແທນຕົວ ອາດຈະມີຂຶ້ນໃນທຸກຂັ້ນຕອນຂອງການດຳເນີນຄະດີ.

ສິດ, ພັນທະ ແລະທຸກການກະທຳຜ່ານມາຂອງຄູ່ຄວາມ ໃນຄະດີນັ້ນ ມີຜົນບັງຄັບສຳລັບຜູ້ສືບຕໍ່ແທນຕົວ.

**ມາດຕາ 28 ບຸກຄົນທີສາມ**

ບຸກຄົນທີສາມ ແມ່ນບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດທີ່ເຂົ້າຮ່ວມໃນຄະດີ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງຕົນທີ່ຕິດພັນກັບຄະດີ ຊຶ່ງກຳລັງຖືກພິຈາລະນາຢູ່ສານ.

ບຸກຄົນທີສາມ ຈະບໍ່ແມ່ນໂຈດ ຫລືຈຳເລີຍ ໂດຍກົງໃນຄະດີ.

ບຸກຄົນທີສາມ ທີ່ໄດ້ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ ສາມາດເຂົ້າຮ່ວມໃນຄະດີ ນັບແຕ່ເວລານັ້ນ ມາຈົນເຖິງການລົງຄຳຕັດສິນຂອງສານ, ນຳໃຊ້ສິດ ແລະມີພັນທະດັ່ງດຽວກັນກັບໂຈດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

ບຸກຄົນທີສາມ ທີ່ບໍ່ໄດ້ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ:

1. ສາມາດເຂົ້າຮ່ວມໃນຄະດີ ເປັນຝ່າຍໂຈດ ຫລືຈຳເລີຍ;
2. ອາດຖືກນຳມາເຂົ້າຮ່ວມໃນຄະດີ ຕາມຄຳຮ້ອງຂໍຂອງຄູ່ຄວາມ, ຂອງໄອຍະການປະຊາຊົນ ຫລືຕາມຄຳສະເໜີຂອງສານ;
3. ນຳໃຊ້ສິດ ແລະມີພັນທະດັ່ງດຽວກັນກັບຄູ່ຄວາມ ເວັ້ນເສັຍແຕ່ສິດໃນການປ່ຽນແປງເປົ້າໝາຍຂອງຄຳຮ້ອງຟ້ອງ, ສິດໃນການເພີ່ມ ຫລືຫຼຸດມູນຄ່າໃນຄຳຮ້ອງຟ້ອງ, ສິດໃນການຖອນຄຳຮ້ອງຟ້ອງ, ສິດໃນການຮັບຮູ້ຄຳຮ້ອງຟ້ອງ ຫລືຕົກລົງກັນໂດຍດີ ແລະສິດໃນການທວງໃຫ້ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

**ມາດຕາ 29 ບຸກຄົນທີສາມ ກ່ຽວກັບການຟື້ນຟູວຽກງານຄືນ**

ໃນການຮ້ອງຂໍກ່ຽວກັບການຟື້ນຟູວຽກງານຄືນໃຫ້ພະນັກງານ, ກຳມະກອນ ຫລືຜູ້ອອກແຮງງານ ທີ່ຖືກໄລ່ອອກຈາກວຽກ ຫລືຍົກຍ້າຍໂດຍບໍ່ຖືກຕ້ອງນັ້ນ ສານຈະໃຫ້ຜູ້ທີ່ອອກຄຳສັ່ງໄລ່ ຫລືຍົກຍ້າຍພະນັກງານ, ກຳມະກອນ ຫລືຜູ້ອອກແຮງງານນັ້ນ ເຂົ້າຮ່ວມໃນນາມບຸກຄົນທີສາມ. ເມື່ອເຫັນວ່າການໄລ່ອອກຈາກວຽກ ຫລືການຍົກຍ້າຍນັ້ນ ຫາກເປັນການລະເມີດກົດໝາຍ ແລ້ວສານຈະຕັດສິນໃຫ້ຜູ້ຖືກໄລ່ອອກ ຫລືຍົກຍ້າຍ ເຂົ້າເຮັດວຽກງານຄືນ ພ້ອມທັງໃຫ້ຜູ້ທີ່ອອກຄຳສັ່ງນັ້ນ ທົດແທນຄ່າເສັຍຫາຍທັງໝົດແກ່ຜູ້ກ່ຽວ.

**ມາດຕາ 30 ພະຍານໃນຄະດີ**

ພະຍານ ແມ່ນບຸກຄົນຜູ້ທີ່ໄດ້ຮູ້ເຫັນເຫດການຕົວຈິງຂອງຂໍ້ຂັດແຍ່ງ ຫລືສະພາບຂອງຄະດີ.

ຄົນຫູຫນວກປາກກືກ, ຄົນປັນຍາອ່ອນ, ເສັຍຈິດ, ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຍາດຕິພີ່ນ້ອງໃກ້ຊິດຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ອາດຈະນຳມາໃຫ້ການ ເພື່ອເອົາເປັນຂໍ້ມູນແຕ່ບໍ່ໃຫ້ຖືວ່າເປັນພະຍານ.

**ສິດຂອງພະຍານມີດັ່ງນີ້**:

1. ໃຫ້ການ;
2. ເບິ່ງບົດບັນທຶກຄຳໃຫ້ການຂອງຕົນ ທີ່ໄດ້ໃຫ້ການໄປແລ້ວ;
3. ສະເໜີດັດແປງ, ເພີ່ມເຕີມບົດບັນທຶກຄຳໃຫ້ການຂອງຕົນ ຫລືໃຫ້ການເພີ່ມເຕີມ;
4. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງຜູ້ພິພາກສາທີ່ຕົນເຫັນວ່າບໍ່ຖືກຕ້ອງ;
5. ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ ແລະຊັບສິນ ຍ້ອນການໃຫ້ການຂອງຕົນ.

**ພັນທະຂອງພະຍານມີດັ່ງນີ້:**

1. ເຂົ້າມາສະເໜີຕົວ ຕາມໝາຍຮຽກຂອງສານ;
2. ໃຫ້ການຢ່າງຖືກຕ້ອງກັບເຫດການຕົວຈິງ;
3. ຮັບຜິດຊອບຕໍ່ການໃຫ້ການເທັດ ຫລືບໍ່ຍອມໃຫ້ການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 153 ຂອງກົດໝາຍອາຍາ; ສານຈະເອົາຄຳໃຫ້ການຂອງພະຍານ ໃນບ່ອນຢູ່ຂອງຜູ້ກ່ຽວເອງກໍໄດ້ ໃນກໍລະນີທີ່ຜູ້ກ່ຽວຫາກເຈັບເປັນ, ເຖົ້າແກ່, ເສັຍອົງຄະ ຫລືບໍ່ສາມາດເຂົ້າມາສານຕາມໝາຍຮຽກ ຍ້ອນມີຄວາມຈຳເປັນ.

ບຸກຄົນທີ່ຮ້ອງຂໍໃຫ້ຮຽກເອົາຕົວພະຍານເຂົ້າມາສານນັ້ນ ຕ້ອງເລົ່າເຫດການໃນຄະດີທີ່ພົວພັນກັບພະຍານນັ້ນຕໍ່ສານ ໂດຍບອກຊື່, ນາມສະກຸນ ແລະບ່ອນຢູ່ຂອງພະຍານນັ້ນຢ່າງຈະແຈ້ງ.

**ມາດຕາ 31 ຜູ້ຊ່ຽວຊານ**

ຜູ້ຊ່ຽວຊານ ແມ່ນບຸກຄົນທີ່ມີຄວາມຮູ້ ແລະປະສົບການທາງດ້ານວິຊາສະເພາະໃດໜຶ່ງທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ພົວພັນກັບວິຊາສະເພາະຂອງຕົນ.

ເມື່ອເຫັນວ່າມີຄວາມຈຳເປັນຕ້ອງທຳການພິສູດຫລັກຖານທີ່ມີການສົງໄສ ກ່ຽວກັບບັນຫາວິທະຍາສາດ, ເຕັກນິກ, ການຄ້າ, ບັນຊີ ແລະອື່ນໆແລ້ວ ສານຕ້ອງອອກຄຳສັ່ງແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທຳການພິສູດ ຕາມຄຳຮ້ອງຂໍຂອງບຸກຄົນທີ່ເຂົ້າຮ່ວມໃນຄະດີ ຫລືຕາມຄຳເຫັນຂອງສານເອງ.

ຜູ້ຊ່ຽວຊານຕ້ອງດຳເນີນການພິສູດຫລັກຖານນັ້ນ ຢູ່ໃນຂອບເຂດທີ່ໄດ້ກຳນົດໄວ້ໃນຄຳສັ່ງ. ພາຍຫລັງທີ່ໄດ້ທຳການພິສູດແລ້ວ ຜູ້ຊ່ຽວຊານຕ້ອງເຮັດບົດສະຫລຸບໃຫ້ຄຳເຫັນໃນນາມຂອງຕົນ ແລ້ວສົ່ງໄປໃຫ້ສານຕາມກຳນົດເວລາທີ່ໄດ້ມອບໝາຍໃຫ້ ແລະຕ້ອງຮັບຜິດຊອບຕໍ່ຄຳເຫັນດັ່ງກ່າວ ພ້ອມທັງຮັກສາຄວາມລັບໃນຄະດີ.

ການພິສູດ ອາດຈະເຮັດໂດຍຜູ້ຊ່ຽວຊານຫຼາຍຄົນ ຫລືຫລາຍເທື່ອກໍໄດ້.

ໃນການພິສູດຄືນໃໝ່ນັ້ນ ຕ້ອງໃຫ້ມີຈຳນວນຜູ້ຊ່ຽວຊານຫລາຍກວ່າເທື່ອຜ່ານມາ.

**ມາດຕາ 32 ຜູ້ແປພາສາ**

ຜູ້ແປພາສາ ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ຫລືປະສົບການໃນການແປພາສາໃດໜຶ່ງຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວ.

ຜູ້ແປພາສາຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະມີພັນທະໃນການຮັກສາຄວາມລັບໃນຄະດີ.

**ມາດຕາ 33 ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ**

ຜູ້ປົກປ້ອງ ແມ່ນບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ;

ຜູ້ປົກປ້ອງອາດແມ່ນທະນາຍຄວາມ, ຜູ້ຕາງໜ້າຂອງອົງການຈັດຕັ້ງ, ວິສາຫະກິດ, ຜົວ ຫລືເມັຍ, ພໍ່ແມ່, ຜູ້ປົກຄອງ ຫລືຍາດພີ່ນ້ອງໃກ້ຊິດ;

ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ມີສິດເຂົ້າຮ່ວມໃນການດຳເນີນຄະດີໃນທຸກຂັ້ນຕອນຂອງການດຳເນີນຄະດີ.

**ສິດຂອງທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ມີດັ່ງນີ້:**

1. ປຶກສາຫາລືກັບຄູ່ຄວາມ;
2. ຍື່ນຄຳຮ້ອງຟ້ອງ ຫລືຄຳຮ້ອງຂໍ;
3. ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫລືກ່າຍເອົາເນື້ອໃນເອກະສານທີ່ຈຳເປັນອອກຈາກສຳນວນຄະດີ;
4. ສະເໜີຫລັກຖານ;

5. ເຂົ້າຮ່ວມໃນການໄຕ່ສວນຄະດີ ໃນທີ່ປະຊຸມສານ ແລະໃຫ້ຄຳເຫັນ;
6. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ;
7. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງຜູ້ພິພາກສາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
8. ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລືຄຳພິພາກສາຂອງສານ;
9. ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ຫລືຊັບສິນ ຍ້ອນການຕໍ່ສູ້ຄະດີໃຫ້ລູກຄວາມຂອງຕົນ.

**ພັນທະຂອງທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ມີດັ່ງນີ້:**

1. ນຳໃຊ້ທຸກວິທີການປົກປ້ອງທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຄູ່ຄວາມຜູ້ທີ່ຕົນປົກປ້ອງ;
2. ໃຫ້ຄວາມຊ່ວຍເຫລືອທາງດ້ານກົດໝາຍແກ່ຄູ່ຄວາມຜູ້ທີ່ຕົນປົກປ້ອງ;
3. ປະກອບສ່ວນຊອກຫາຫລັກຖານ ເພື່ອໃຫ້ການດຳເນີນຄະດີຖືກຕ້ອງ ແລະຍຸຕິທຳ ບົນພື້ນຖານການປະຕິບັດຈັນຍາທຳຂອງຕົນ.

ນອກຈາກນີ້ ທະນາຍຄວາມຍັງຕ້ອງປະຕິບັດສິດ ແລະພັນທະອື່ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງສະພາທະນາຍຄວາມ.

## ໝວດທີ 2
## ການຕາງໜ້າຢູ່ສານ

**ມາດຕາ 34 ຜູ້ຕາງໜ້າຕາມກົດໝາຍ**

ຜູ້ຕາງໜ້າຕາມກົດໝາຍ ແມ່ນບຸກຄົນທີ່ມີສິດຕໍ່ສູ້ຄະດີ ໂດຍບໍ່ມີການແຕ່ງຕັ້ງ ແລະມອບໝາຍຈາກຜູ້ທີ່ຕົນປົກປ້ອງ.

ຜູ້ຕາງໜ້າຕາມກົດໝາຍ ມີດັ່ງນີ້:

- ຜູ້ປົກປ້ອງສິດ ແລະຜົນປະໂຫຍດຂອງເດັກທີ່ບໍ່ທັນເຖິງສິບແປດປີ, ຄົນບ້າ, ເສັຍຈິດ, ຄົນປັນຍາອ່ອນ, ຄົນຫູໜວກ ປາກກືກ ຊຶ່ງແມ່ນພໍ່ແມ່ ຫລືຜູ້ປົກຄອງ;

- ຜູ້ຕາງໜ້າຂອງຜູ້ຫາຍສາບສູນ ຊຶ່ງແມ່ນຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະຄຸ້ມຄອງຊັບສິ່ງຂອງ ຂອງຜູ້ຫາຍສາບສູນ;

- ຜູ້ຕາງຫນ້າຂອງຜູ້ສືບທອດ ຊຶ່ງແມ່ນຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະຄຸ້ມຄອງມູນມໍລະດົກຂອງຜູ້ສືບທອດຂອງເຈົ້າມູນມໍລະດົກທີ່ໄດ້ເສັຍຊີວິດ ຫລືຖືກສານຕັດສິນວ່າ ເປັນຜູ້ເສັຍຊີວິດ ຖ້າວ່າມູນມໍລະດົກນັ້ນ ຫາກຍັງບໍ່ທັນມີບຸກຄົນໃດຮັບເອົາ.

ນອກຈາກນີ້ ຜູ້ຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນທີ່ມອບໃຫ້ຕົນຮັກສານັ້ນ ກໍຖືວ່າເປັນຜູ້ຕາງໜ້າຕາມກົດໝາຍ.

ຜູ້ຕາງໜ້າຕາມກົດໝາຍ ມີສິດ ແລະພັນທະດັ່ງດຽວກັນກັບຄູ່ຄວາມ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 25 ຂອງກົດໝາຍສະບັບນີ້.

**ມາດຕາ 35 ຜູ້ຕາງໜ້າຢູ່ສານ**

ຜູ້ຕາງໜ້າຢູ່ສານ ແມ່ນບຸກຄົນທີ່ມີສິດຕໍ່ສູ້ຄະດີ ໂດຍມີການແຕ່ງຕັ້ງ ຫລືມອບໝາຍຈາກຜູ້ທີ່ຕົນປົກປ້ອງ ຫລືຈາກສານປະຊາຊົນ.

ຜູ້ຕາງໜ້າຢູ່ສານ ມີດັ່ງນີ້:

1. ທະນາຍຄວາມ;
2. ພະນັກງານ ຫລືກໍາມະກອນຂອງອົງການຈັດຕັ້ງ ຫລືວິສາຫະກິດ ທີ່ຖືກມອບໝາຍໃນຄະດີທີ່ກ່ຽວຂ້ອງກັບອົງການຈັດຕັ້ງ ຫລືວິສາຫະກິດນັ້ນ;
3. ບຸກຄົນທີ່ຖືກມອບໝາຍຈາກບັນດາຄູ່ຄວາມໃນຄະດີດ້ວຍກັນ;
4. ບຸກຄົນທີ່ສານໃຫ້ເປັນຜູ້ຕາງໜ້າໃນຄະດີທີ່ກ່ຽວຂ້ອງ.

**ມາດຕາ 36 ການມອບສັນທະເປັນຜູ້ຕາງໜ້າ**

ການມອບສັນທະເປັນຜູ້ຕາງໜ້າ ແມ່ນການມອບສິດ ແລະພັນທະຂອງຄູ່ຄວາມ ຫລືບຸກຄົນທີສາມໃຫ້ບຸກຄົນໃດໜຶ່ງປະຕິບັດແທນຕົນຢູ່ສານ. ການມອບສັນທະຕ້ອງເຮັດເປັນລາຍລັກອັກສອນ ໂດຍມີການຢັ້ງຢືນຈາກອົງການຈັດຕັ້ງໃດໜຶ່ງ ບ່ອນທີ່ຜູ້ມອບໝາຍສັງກັດຢູ່ ເຊັ່ນ: ອົງການຈັດຕັ້ງ ຫລືວິສາຫະກິດ, ສໍານັກງານທະບຽນສານ ຫລືອົງການປົກຄອງບ້ານ, ສະຖາບັນ, ໂຮງຮຽນ, ໂຮງໝໍ, ຄ້າຍຄຸມຂັງ ແລະບ່ອນອື່ນໆ.

ໃບມອບສັນທະໃນນາມນິຕິບຸກຄົນ ແມ່ນຕ້ອງອອກໃຫ້ໂດຍຫົວໜ້າອົງການຈັດຕັ້ງ ຫລືວິສາຫະກິດທີ່ກ່ຽວຂ້ອງ.

## ໝວດທີ 3
## ການເຂົ້າຮ່ວມຂອງໄອຍະການປະຊາຊົນ

**ມາດຕາ 37 ພາລະບົດບາດຂອງໄອຍະການປະຊາຊົນໃນການດໍາເນີນຄະດີແພ່ງ**

ໄອຍະການປະຊາຊົນ ເຂົ້າຮ່ວມໃນການດໍາເນີນຄະດີແພ່ງ ໃນຖານະເປັນຜູ້ຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ແລະເປັນໂຈດໃນຄະດີແພ່ງ ຕາມທີ່ກົດຫມາຍໄດ້ກໍານົດໄວ້ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ ຫລືຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຄື: ຄົນບ້າ ເສັຍຈິດ, ເດັກ ທີ່ບໍ່ເຖິງກະສຽນອາຍຸສິບແປດປີ ທີ່ບໍ່ມີຜູ້ປົກປ້ອງ.

**ມາດຕາ 38 ການເຂົ້າຮ່ວມຂອງໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ**

ໄອຍະການປະຊາຊົນ ມີສິດເຂົ້າຮ່ວມໃນການດໍາເນີນຄະດີແພ່ງ ເພື່ອຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ແນໃສ່ເຮັດໃຫ້ຄະດີຖືກດໍາເນີນໄປຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະຍຸຕິທໍາ.

**ມາດຕາ 39 ການເຂົ້າຮ່ວມຂອງໄອຍະການປະຊາຊົນ ໃນຖານະເປັນໂຈດໃນການດໍາເນີນຄະດີແພ່ງ**

ໃນກໍລະນີທີ່ເຫັນວ່າຄະດີແພ່ງນັ້ນ ຫາກແຕະຕ້ອງເຖິງຜົນປະໂຫຍດຂອງລັດ ຫລືສັງຄົມ ແຕ່ຫາກບໍ່ມີອົງການຈັດຕັ້ງ ຫລືວິສາຫະກິດໃດທໍາການຮ້ອງຟ້ອງ ໄອຍະການປະຊາຊົນກໍມີສິດຍື່ນຄໍາຮ້ອງຟ້ອງຕໍ່ສານ ໃນຖານະເປັນໂຈດໃນຄະດີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ໄອຍະການປະຊາຊົນທີ່ເຂົ້າຮ່ວມໃນຄະດີ ມີສິດເບິ່ງສໍານວນຄະດີ, ສະເໜີຄ້ານຕົວຄະນະສານ, ຈ່າສານ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ, ສະເໜີຫລັກຖານ, ເຂົ້າຮ່ວມໃນການຊອກຄົ້ນຫລັກຖານ, ຍື່ນຄໍາຄັດຄ້ານ, ໃຫ້ຄໍາຖະແຫລງ ກ່ຽວກັບບັນຫາທີ່ເກີດຂຶ້ນໃນເວລາໄຕ່ສວນຄະດີ.

## ໝວດທີ 4
## ໝາຍຮຽກຂອງສານ

**ມາດຕາ 40 ໝາຍຮຽກ ແລະການສົ່ງໝາຍຮຽກ**

ໝາຍຮຽກ ແມ່ນໜັງສືຮຽກຕົວໂຈດ, ຈໍາເລີຍ, ບຸກຄົນທີສາມ, ພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາໃຫ້ເຂົ້າມາສານ ຕາມວັນເວລາ ແລະສະຖານທີ່ ທີ່ໄດ້ກໍານົດໄວ້ໃນໝາຍຮຽກ ຊຶ່ງແມ່ນສານເປັນຜູ້ອອກ.

ໝາຍຮຽກ ທີ່ສົ່ງໃຫ້ຜູ້ຖືກຮຽກນັ້ນ ຕ້ອງໃຫ້ຜູ້ກ່ຽວເຊັນຊື່ ແລະແປະໂປ້ມືໃສ່ໝາຍຮຽກນັ້ນ. ຖ້າວ່າຜູ້ກ່ຽວຂ້ອງ ຫາກບໍ່ຍອມເຊັນຊື່ ແລະແປະໂປ້ມືໃສ່ ກໍໃຫ້ຜູ້ນໍາສົ່ງໝາຍຮຽກນັ້ນ ໝາຍເຫດໄວ້ໃສ່ໝາຍຮຽກ.

ໝາຍຮຽກ ອາດຈະສົ່ງໄປໃຫ້ຕາມບ່ອນຢູ່ຂອງຜູ້ກ່ຽວ ຫລືບ່ອນທີ່ຜູ້ກ່ຽວເຮັດວຽກ ກໍໄດ້.

ການສົ່ງໝາຍຮຽກ ຕ້ອງໃຫ້ຜູ້ຖືກຮຽກນັ້ນໄດ້ຮັບກ່ອນວັນນັດໝາຍເຂົ້າມາສານ ຢ່າງໜ້ອຍສາມວັນ. ໝາຍຮຽກຕ້ອງເຮັດເປັນສາມສະບັບ ໜຶ່ງສະບັບເອົາໃຫ້ຜູ້ກ່ຽວຂ້ອງ, ໜຶ່ງສະບັບເອົາໃຫ້ອົງການປົກຄອງບ້ານທີ່ກ່ຽວຂ້ອງ ແລະອີກໜຶ່ງສະບັບ ພາຍຫລັງເຊັນຮັບຮູ້ແລ້ວເອົາກັບຄືນໄວ້ໃນສໍານວນຄະດີ.

**ມາດຕາ 41 ເນື້ອໃນຂອງໝາຍຮຽກ**

ໝາຍຮຽກ ຕ້ອງມີເນື້ອໃນ ດັ່ງນີ້ :

1. ຊື່ ຂອງສານປະຊາຊົນ;
2. ຊື່ ແລະນາມສະກຸນຂອງຜູ້ຖືກຮຽກ;
3. ຜູ້ຖືກຮຽກເຂົ້າມາສານພົວພັນກັບຄະດີເລື່ອງໃດ, ໃນຖານະ ແລະຈຸດປະສົງໃດ;
4. ສະຖານທີ່ ແລະວັນເວລາເຂົ້າມາສານ;
5. ຂໍ້ແນະນຳໃຫ້ຜູ້ຖືກຮຽກນັ້ນ ປະຕິບັດສິ່ງໃດສິ່ງໜຶ່ງເຊັ່ນ: ນຳເອົາຫລັກຖານເຂົ້າມາສານ;
6. ການເຕືອນໃຫ້ຮູ້ ກ່ຽວກັບຜົນສະທ້ອນຂອງຜູ້ຖືກຮຽກ ທີ່ບໍ່ເຂົ້າມາສານ.

**ມາດຕາ 42 ພັນທະເຂົ້າມາສານຕາມໝາຍຮຽກ**

ບຸກຄົນໃດທີ່ໄດ້ຮັບໝາຍຮຽກ ຕ້ອງໄດ້ເຂົ້າມາສານຕາມວັນ, ເວລາ, ສະຖານທີ່ ຕາມທີ່ກຳນົດໄວ້ໃນໝາຍຮຽກ.

ຖ້າໂຈດ ຫລືຜູ້ຕາງໜ້າຂອງໂຈດ ຫາກໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ແລະບໍ່ໄດ້ສະເໜີເຫດຜົນທີ່ເຊື່ອຖືໄດ້ ເຖິງສາມຄັ້ງແລ້ວ ສານຈະອອກຄຳສັ່ງຊັດມ້ຽນ ຄະດີໄວ້ ແລະໃຫ້ໂຈດເສັຍສິດໃນການຮ້ອງຟ້ອງຄະດີນັ້ນ.

ໃນກໍລະນີທີ່ຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກ ຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ໃຫ້ອົງການປົກຄອງບ້ານຮູ້ນຳແລ້ວ ໂຈດມີສິດຮ້ອງຂໍໃຫ້ສານຕັດສິນລັບຫລັງເລີຍກໍໄດ້.

**ມາດຕາ 43 ການດຳເນີນການ ເມື່ອຄູ່ຄວາມເຂົ້າມາສານຕາມໝາຍຮຽກ**

ໃນເມື່ອຄູ່ຄວາມ ຫລືຜູ້ຕາງໜ້າຂອງຄູ່ຄວາມ ຫາກໄດ້ເຂົ້າມາສານ ຕາມໝາຍຮຽກແລ້ວ ຜູ້ພິພາກສາ ຫລືຄະນະສານ ຕ້ອງໄດ້ເອົາຄຳໃຫ້ການ, ຟັງຄຳອະທິບາຍ ຫລືເບິ່ງຫລັກຖານຕ່າງໆໃນຄະດີຂອງຄູ່ຄວາມ. ໃນກໍລະນີທີ່ຈຳເປັນ ກໍອາດຈະມີການຖາມຊ້ອງໜ້າກັນກໍໄດ້.

**ມາດຕາ 44 ໝາຍພາຕົວ**

ໝາຍພາຕົວ ແມ່ນຄຳສັ່ງຂອງສານໃຫ້ເຈົ້າໜ້າທີ່ຕຳຫລວດນຳເອົາຕົວຈຳເລີຍ, ພະຍານ ເຂົ້າມາສານຕາມວັນ, ເວລາ, ສະຖານທີ່ ແລະພົບກັບພະນັກງານຂອງສານ ທີ່ໄດ້ກຳນົດໄວ້ໃນໝາຍພາຕົວນັ້ນ.

ໃນກໍລະນີທີ່ຈຳເລີຍ, ພະຍານ ຫາກໄດ້ຮັບໝາຍຮຽກເຖິງ ສາມຄັ້ງ ແຕ່ບໍ່ເຂົ້າມາສານ ຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍ ສານຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວເຂົ້າມາສານ; ໃນການພາຕົວນັ້ນ ຕ້ອງມີການປະສານສົມທົບກັບອົງການປົກຄອງບ້ານ, ນອກຈາກນີ້ແລ້ວ ຜູ້ກ່ຽວອາດຈະຖືກດຳເນີນຄະດີ ຕາມທີ່ໄດ້ ກຳນົດໄວ້ໃນມາດຕາ 162 ຂອງກົດໝາຍອາຍາ.

**ພາກທີ IV**

## ສິດອຳນາດຂອງຄະນະສານ

## ໝວດທີ 1

## ສິດອຳນາດຂອງຄະນະສານແພ່ງ

### ມາດຕາ 45 ສິດອຳນາດຂອງຄະນະສານແພ່ງ

ຄະນະສານແພ່ງ ມີສິດອຳນາດຕັດສິນ:

1. ຄະດີ ກ່ຽວກັບກຳມະສິດ ແລະມູນມໍຣະດົກ;
2. ຄະດີ ກ່ຽວກັບສາຍພົວພັນທາງແພ່ງເປັນຕົ້ນການລະເມີດສັນຍາ ເວັ້ນເສຍແຕ່ສັນຍາທີ່ມີລັກສະນະທຸລະກິດການຄ້າ;
3. ຄະດີ ກ່ຽວກັບການທວງເອົາການໃຊ້ແທນຄ່າເສັຍຫາຍ;
4. ຄະດີ ກ່ຽວກັບແຮງງານ;
5. ຄະດີ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ.

### ມາດຕາ 46 ຄະດີກ່ຽວກັບແຮງງານ

ຄະດີກ່ຽວກັບແຮງງານ ຊຶ່ງສານຈະພິຈາລະນາຕັດສິນໄດ້ນັ້ນ ກໍຕໍ່ເມື່ອອົງການຄຸ້ມຄອງແຮງ ງານ ຫລືຄະນະກຳມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຫາກບໍ່ສາມາດແກ້ໄຂໄດ້ ມີດັ່ງນີ້:

- ຂໍ້ຂັດແຍ່ງ ກ່ຽວກັບລະບຽບກົດໝາຍ ເປັນຕົ້ນສັນຍາແຮງງານ, ການຮ້ອງຂໍເອົາເງິນອຸດໜູນ ເນື່ອງມາຈາກການຍົກເລີກສັນຍາແຮງງານໂດຍບໍ່ຖືກຕ້ອງ ຫລືອຸປະຕິເຫດແຮງງານ ຫລືພະຍາດອາຊີບ;
- ຂໍ້ຂັດແຍ່ງແຮງງານດ້ານຜົນປະໂຫຍດເຊັ່ນ: ເງິນເດືອນ ຫລືຄ່າແຮງງານ.

ລາຍລະອຽດ ກ່ຽວກັບຂໍ້ຂັດແຍ່ງດັ່ງກ່າວໄດ້ກຳນົດໄວ້ໃນກົດໝາຍແຮງງານ.

### ມາດຕາ 47 ຄະດີກ່ຽວກັບສາຍພົວພັນທາງດ້ານບໍລິຫານ

ຄະດີ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ ທີ່ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຊຶ່ງສານຈະພິຈາລະນາຕັດສິນ ມີດັ່ງນີ້:

- ຄະດີ ກ່ຽວກັບຄວາມຜິດພາດໃນການຂຶ້ນບັນຊີຜູ້ມີສິດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້;
- ຄະດີ ກ່ຽວກັບການກະທຳຂອງພະນັກງານອົງການບໍລິຫານ ກ່ຽວກັບການປັບໃໝ, ການເກັບອາກອນລາຍໄດ້ທີ່ບໍ່ຖືກຕ້ອງ ແລະອື່ນໆ;
- ຄະດີ ກ່ຽວກັບການຮິບຊັບສິ່ງຂອງໂດຍບໍ່ຖືກຕ້ອງ;
- ຄະດີ ກ່ຽວກັບຄວາມຜິດພາດອື່ນ ໃນຂົງເຂດບໍລິຫານ.

## ໝວດທີ 2

## ສິດອຳນາດ ຂອງຄະນະສານການຄ້າ

### ມາດຕາ 48 ສິດອຳນາດຂອງຄະນະສານການຄ້າ

ຄະນະສານການຄ້າ ມີສິດອຳນາດຕັດສິນ:

1. ຄະດີກ່ຽວກັບທຸລະກິດ, ການຄ້າ;
2. ຄະດີກ່ຽວກັບສັນຍາທາງດ້ານທຸລະກິດ, ການຄ້າ ຫລືເອກະສານການຄ້າເຊັ່ນ ໃບສັນຍາໃຊ້ໜີ້, ພັນທະບັດແລກເງິນ, ເຊັກ ແລະອື່ນໆ;
3. ຄະດີກ່ຽວກັບສັນຍາກູ້ຢືມທາງການຄ້າ;
4. ຄະດີກ່ຽວກັບການລົ້ມລະລາຍຂອງວິສາຫະກິດ ແລະການຊຳລະສະສາງ;
5. ຄະດີທຸລະກິດ, ການຄ້າທີ່ພົວພັນເຖິງສິນຄ້າສົ່ງອອກ ຫລືນຳເຂົ້າ, ການຂົນສົ່ງສິນຄ້າ, ການປະກັນໄພ, ການບໍລິການທາງດ້ານທະນາຄານ ແລະການເງິນ, ການຕະຫລາດ ແລະການເປັນຕົວແທນ;
6. ຄະດີທີ່ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງສົ່ງໃຫ້ສານພິຈາລະນາ ເພື່ອໃຫ້ມີຜົນບັງຄັບປະຕິບັດ;
7. ຄະດີກ່ຽວກັບການລະເມີດລິຂະສິດ ແລະເຄື່ອງໝາຍການຄ້າ;
8. ຄະດີອື່ນໆ ກ່ຽວກັບສາຍພົວພັນທາງດ້ານທຸລະກິດ, ການຄ້າ.

### ມາດຕາ 49 ການດຳເນີນຄະດີຂອງຄະນະສານການຄ້າ

ມີແຕ່ສານປະຊາຊົນແຂວງ, ນະຄອນເທົ່ານັ້ນ ຈຶ່ງມີສິດພິຈາລະນາຄະດີການຄ້າເປັນຂັ້ນຕົ້ນ;

ຄະນະສານການຄ້າ ຕ້ອງພິຈາລະນາຕັດສິນຄະດີຢ່າງຖືກຕ້ອງ, ວ່ອງໄວ ແລະຍຸຕິທຳ ເພື່ອຮັບປະກັນປະສິດທິພາບ ແລະເວລາຂອງການດຳເນີນທຸລະກິດ;

ໃນການພິຈາລະນາຄະດີການຄ້າ ຕ້ອງຮັກສາຄວາມລັບຂອງບຸກຄົນ, ອົງການຈັດຕັ້ງ ແລະວິສາຫະກິດ ທີ່ເຂົ້າຮ່ວມໃນການດຳເນີນຄະດີ;

ການດຳເນີນຄະດີການຄ້າ ແມ່ນອີງໃສ່ກົດໝາຍວ່າດ້ວຍທຸລະກິດ, ການຄ້າ ແລະກົດໝາຍອື່ນໆ ລວມທັງພາກປະຕິບັດທາງດ້ານການຄ້າພາຍໃນ ແລະສາກົນ;

ນອກຈາກຫລັກການທີ່ກ່າວມາເທິງນີ້ແລ້ວ ຄະນະສານການຄ້າຍັງຕ້ອງໄດ້ປະຕິບັດຕາມຫລັກການທົ່ວໄປຂອງການດຳເນີນຄະດີແພ່ງ.

### ມາດຕາ 50 ຫລັກຖານໃນຄະດີການຄ້າ

ຫລັກຖານໃນຄະດີການຄ້າ ອາດຈະແມ່ນເອກະສານ, ວັດຖຸສິ່ງຂອງ ຫລືຂໍ້ມູນຂ່າວສານສຳຄັນ ທີ່ມີຄຸນຄ່າທາງດ້ານຫລັກຖານໃນການດຳເນີນຄະດີ ລວມທັງຄຳໃຫ້ການ, ເອກະສານອ້າງອີງຕ່າງໆ, ຮູບພາບ, ໂທລະສັບ, ໂທລະສານ ຫລືເຄື່ອງມືທາງດ້ານວິທະຍາສາດຕ່າງໆ.

### ມາດຕາ 51 ການທວງໜີ້ກ່ອນການຮ້ອງຟ້ອງ

ກ່ອນການຮ້ອງຟ້ອງຄະດີການຄ້າຕໍ່ສານ ເຈົ້າໜີ້ຈະທວງໃຫ້ລູກໜີ້ໃຊ້ແທນໜີ້ສິນ ຫລືໄກ່ເກ່ຍກັນເສຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ຈຶ່ງໃຫ້ເຈົ້າໜີ້ຮ້ອງຟ້ອງຕໍ່ສານ ແລ້ວສະເໜີໃຫ້ສານແຈ້ງໃຫ້ລູກໜີ້ນຳເອົາເອກະສານ ຫລືບັນຊີຊັບສິນບັດຂອງຕົນມາແຈ້ງຕໍ່ສານ ພ້ອມທັງສະເໜີໃຫ້ສານອອກຄຳສັ່ງຢຶດ ຫລືອາຍັດຊັບ ເພື່ອຮັບປະກັນການໃຊ້ແທນໜີ້ສິນນັ້ນ.

**ມາດຕາ 52 ການໄກ່ເກ່ຍຄະດີຢູ່ຄະນະສານການຄ້າ**

ກ່ອນຈະນຳເອົາຄະດີອອກຕັດສິນນັ້ນ ຄະນະສານການຄ້າຕ້ອງຄົ້ນຄວ້າຊອກຫາວິທີທາງ ເພື່ອທຳການໄກ່ເກ່ຍໃຫ້ຄູ່ຄວາມຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນ.

ເມື່ອການໄກ່ເກ່ຍຕໍ່ໜ້າຄະນະສານ ຫາກມີການຕົກລົງກັນ ກ່ຽວກັບການໃຊ້ແທນໜີ້ສິນລະຫວ່າງເຈົ້າໜີ້ ແລະລູກໜີ້ແລ້ວ ການຕົກລົງດັ່ງກ່າວຈະມີຜົນບັງຄັບປະຕິບັດໂດຍທັນທີ. ໃນການໃຊ້ແທນໜີ້ສິນນັ້ນ ໃຫ້ຊຳລະໝົດເທື່ອດຽວ ຖ້າຫາກບໍ່ມີຄວາມສາມາດຊຳລະໝົດເທື່ອດຽວໄດ້ ກໍໃຫ້ຊຳລະເປັນງວດ ແຕ່ໃນງວດທຳອິດນັ້ນ ຕ້ອງຊຳລະກ່ອນຢ່າງໜ້ອຍບໍ່ໃຫ້ຫລຸດໜຶ່ງສ່ວນສາມຂອງໜີ້ສິນທັງໝົດ.

**ມາດຕາ 53 ການພິຈາລະນາຄຳຕົກລົງໄກ່ເກ່ຍ ຫລືຄຳຕັດສິນຂອງກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຄຳຕົກລົງໄກ່ເກ່ຍ ຫລືຄຳຕັດສິນຂອງກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ບໍ່ໄດ້ຮັບການປະຕິບັດນັ້ນ ຄູ່ຄວາມມີສິດສະເໜີຕໍ່ສານເພື່ອພິຈາລະນາ.

ໃນການພິຈາລະນາຄຳຕົກລົງໄກ່ເກ່ຍ ຫລືຄຳຕັດສິນຂອງກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ສານພຽງແຕ່ຈະກວດກາເບິ່ງວ່າ ການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ໄດ້ປະຕິບັດຖືກຕ້ອງຕາມຂໍ້ກຳນົດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທີ່ໄດ້ນຳໃຊ້ນັ້ນຫລືບໍ່ ແລະກວດກາຄວາມຖືກຕ້ອງທາງດ້ານລະບຽບກົດໝາຍ ກ່ຽວກັບຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມເທົ່ານັ້ນ. ຖ້າຫາກເຫັນວ່າຖືກຕ້ອງແລ້ວ ສານກໍຈະລົງຄຳຕັດສິນຢັ້ງຢືນເອົາ ແລະຄຳຕົກລົງ ຫລືຄຳຕັດສິນຂອງກຳມະການດັ່ງກ່າວ ກໍຈະມີຜົນບັງຄັບປະຕິບັດ. ຄູ່ຄວາມບໍ່ມີສິດຂໍອຸທອນ ເວັ້ນເສັຍແຕ່ຄຳຕັດສິນຂອງສານປະຊາຊົນນັ້ນ ຫາກໄດ້ຢັ້ງຢືນເອົາຄຳຕົກລົງ ຫລືຄຳຕັດສິນຂອງກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ຜິດພາດ ຫລືຄຳຕັດສິນຂອງສານປະຊາຊົນນັ້ນ ຫາກບໍ່ກົງກັບຄຳຕົກລົງໄກ່ເກ່ຍຂອງຄູ່ຄວາມ ຫລືຄຳຕັດສິນຂອງກຳມະການຕັດສິນ.

ໃນກໍລະນີທີ່ສານເຫັນວ່າຄຳຕົກລົງ ຫລືຄຳຕັດສິນຂອງກຳມະການນັ້ນ ຫາກໄດ້ລະເມີດຂໍ້ກຳນົດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫລືລະເມີດລະບຽບກົດໝາຍກ່ຽວກັບຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມນັ້ນ ສານກໍຈະບໍ່ລົງຄຳຕັດສິນຢັ້ງຢືນເອົາ. ຄູ່ຄວາມທີ່ບໍ່ພໍໃຈ ມີສິດຍື່ນຄຳຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕາມກົດໝາຍ.

**ມາດຕາ 54 ຄະດີການຄ້າ ຫລັງການຕັດສິນ**

ພາຍຫລັງທີ່ສານໄດ້ຕັດສິນຄະດີການຄ້າແລ້ວ ຖ້າຫາກບໍ່ມີການຂໍອຸທອນ ຄຳຕັດສິນດັ່ງກ່າວກໍຈະຖືກສົ່ງໄປຍັງຫ້ອງການປະຕິບັດຄຳຕັດສິນຂອງສານບ່ອນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໃຫ້ສຳເລັດໂດຍໄວ.

## ໝວດທີ 3
## ສິດອຳນາດ ຂອງຄະນະສານຄອບຄົວ

**ມາດຕາ 55 ສິດອຳນາດຂອງຄະນະສານຄອບຄົວ**

ຄະນະສານຄອບຄົວ ມີສິດອຳນາດຕັດສິນ:

1. ຄະດີ ກ່ຽວກັບສາຍຜົວເມັຍເຊັ່ນ: ການຢ່າຮ້າງ, ການແບ່ງປັນສິນສົມສ້າງ, ໜີ້ສິນຂອງຄູ່ຜົວເມັຍ;
2. ຄະດີ ກ່ຽວກັບການຮ້ອງຂໍເອົາຄ່າລ້ຽງດູຜົວ ຫລືເມັຍ ແລະລູກ;
3. ຄະດີ ກ່ຽວກັບສາຍພົວພັນຄອບຄົວເຊັ່ນ: ການຮັບຮູ້ການເປັນສາຍຍາດ, ການເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ການຫາຍສາບສູນ, ການປະກາດການເສັຍຊີວິດຂອງບຸກຄົນໃດໜຶ່ງ;
4. ຄະດີ ກ່ຽວກັບການຮ້ອງຂໍເອົາລູກມາຢູ່ໃນການຄຸ້ມຄອງ;
5. ຄະດີ ກ່ຽວກັບການປົດສິດໃນການເປັນພໍ່, ແມ່ ແລະລູກ;
6. ຂໍ້ຂັດແຍ່ງ ກ່ຽວກັບການເປັນລູກລ້ຽງ;
7. ຄະດີ ກ່ຽວກັບການຮັບຮູ້ເດັກເປັນລູກ ຫລືການຮັບຮູ້ການເປັນພໍ່;
8. ຄະດີກ່ຽວກັບຜົນປະໂຫຍດຂອງເດັກເຊັ່ນ: ການໃສ່ຊື່, ນາມສະກຸນ ແລະສັນຊາດຂອງເດັກ;
9. ຄະດີກ່ຽວກັບຄວາມເສັຍຫາຍ ທີ່ເນື່ອງມາຈາກການບໍ່ປະຕິບັດຕາມການສູ່ຂໍ, ການຮ່ວມປະເວນີກັນກ່ອນແຕ່ງດອງ, ການແຕ່ງດອງເປັນໂມຄະ ແລະອື່ນໆ.

**ມາດຕາ 56 ການໄກ່ເກັ່ຍຄະດີຄອບຄົວ**

ກ່ອນການພິຈາລະນາຕັດສິນຄະດີຢ່າຮ້າງນັ້ນ ສານຕ້ອງພະຍາຍາມທຳການໄກ່ເກັ່ຍໃຫ້ຄູ່ຜົວເມັຍຄືນດີກັນ ໂດຍເຊີນເອົາພໍ່ແມ່ ແລະຍາດພີ່ນ້ອງຂອງຄູ່ຄວາມນັ້ນເຂົ້າມາສານ ເພື່ອປຶກສາຫາລືຫລືຊ່ວຍເຫລືອສານໃນການສຶກສາອົບຮົມໄກ່ເກັ່ຍໃຫ້ຄູ່ຄວາມ ໄດ້ເຂົ້າອົກເຂົ້າໃຈ ແລະປະນີປະນອມກັນ ກ້າວໄປເຖິງບ່ອນຢູ່ຮ່ວມກັນ.

ຖ້າຄູ່ຜົວເມັຍຫາກຄືນດີກັນໄດ້ ສານກໍເຮັດບົດບັນທຶກໄວ້ ແລ້ວໃຫ້ຖອນຄໍາຮ້ອງຂໍຢ່າຮ້າງ.

ໃນກໍລະນີທີ່ບໍ່ສາມາດຕົກລົງກັນໄດ້ ສານຈະໃຫ້ເວລາໄປຄົ້ນຄິດຮື່ນຕອງ ໃນກໍານົດບໍ່ໃຫ້ເກີນສາມເດືອນ.

ຖ້າວ່າຄູ່ຜົວເມຍຫາກບໍ່ສາມາດຄືນດີກັນໄດ້ ຕາມກໍານົດເວລາທີ່ສານໄດ້ກໍານົດໃຫ້ນັ້ນແລ້ວ ສານກໍຈະພິຈາລະນາຕັດສິນກ່ຽວກັບຄໍາຮ້ອງຂໍຢ່າຮ້າງຕາມກົດໝາຍ.

**ມາດຕາ 57 ການແບ່ງປັນສິນສົມສ້າງ ແລະການຄຸ້ມຄອງລູກ**

ການແບ່ງປັນສິນສົມສ້າງຂອງຄູ່ຜົວເມັຍ ໃຫ້ປະຕິບັດຕາມມາດຕາ 28 ຂອງກົດໝາຍຄອບຄົວ.

ໃນກໍລະນີທີ່ມີການຢ່າຮ້າງກັນ ເດັກທີ່ມີອາຍຸຕໍ່າກວ່າເຈັດປີ ສານຈະມອບໃຫ້ເດັກນັ້ນຢູ່ນໍາຜູ້ເປັນແມ່ ເວັ້ນເສັຍແຕ່ຜູ້ເປັນແມ່ ຫາກບໍ່ຮັບເອົາເດັກ ຫລືບໍ່ມີເງື່ອນໄຂໃນການລ້ຽງດູເດັກຕໍ່ໄປ. ສໍາລັບເດັກທີ່ມີອາຍຸແຕ່ ເຈັດປີ ຂຶ້ນໄປນັ້ນ ໃຫ້ຖາມຄວາມສະໝັກໃຈຂອງເດັກເສັຍກ່ອນ.

ໃນກໍລະນີທີ່ພໍ່ ແລະແມ່ ຫາກບໍ່ຮັບເອົາເດັກ ຫລືບໍ່ເໝາະສົມໃນການລ້ຽງດູເດັກແລ້ວ ສານກໍຈະພິຈາລະນາມອບເດັກໃຫ້ບຸກຄົນທີສາມເປັນຜູ້ຄຸ້ມຄອງລ້ຽງດູ.

**ມາດຕາ 58 ການພິຈາລະນາຄ່າລ້ຽງດູ**

ເມື່ອມີການຮ້ອງຂໍເອົາຄ່າລ້ຽງດູຜົວ ຫລືເມັຍ ແລະລູກ ໃນກໍລະນີມີການຢ່າຮ້າງນັ້ນ ຖ້າຫາກມີສິນສົມສ້າງ ກໍໃຫ້ແບ່ງເອົາຈາກພູດສິນສົມສ້າງທີ່ຝ່າຍຜູ້ມີພັນທະລ້ຽງໄດ້ຮັບນັ້ນ ເປັນຄ່າລ້ຽງດູ. ໃນກໍລະນີທີ່ບໍ່ມີສິນສົມສ້າງ ກໍໃຫ້ສານຕັດສິນໃຫ້ຝ່າຍຜູ້ມີພັນທະລ້ຽງດູນັ້ນ ຈ່າຍຄ່າລ້ຽງດູເປັນແຕ່ລະເດືອນຕາມອັດຕາຄ່າຄອງຊີບໃນແຕ່ລະໄລຍະ. ຖ້າສິນສົມສ້າງຫາກເປັນເຮືອນທີ່ຄອບຄົວດໍາລົງຊີວິດຢູ່ນັ້ນ ຜົວ ຫລືເມັຍ ທີ່ມີລູກຢູ່ນໍານັ້ນ ມີບຸລິມະສິດໃນການໄດ້ຮັບເຮືອນດັ່ງກ່າວ. ຖ້າມູນຄ່າເຮືອນຫາກສູງກວ່າພູດຂອງຜູ້ມີພັນທະລ້ຽງດູລູກໄດ້ຮັບນັ້ນ ກໍໃຫ້ຜູ້ໄດ້ຮັບເຮືອນນັ້ນສົ່ງມູນຄ່າທີ່ເກີນໃຫ້ແກ່ອີກຝ່າຍໜຶ່ງ.

**ມາດຕາ 59 ການປົດສິດໃນການເປັນພໍ່, ແມ່ ແລະລູກ**

ການພິຈາລະນາກ່ຽວກັບການປົດສິດໃນການເປັນພໍ່, ແມ່ຂອງເດັກ ຕາມຄໍາສະເໜີຂອງແມ່, ພໍ່, ຍາດໃກ້ຊິດ ຫລືໄອຍະການປະຊາຊົນ ໄດ້ນັ້ນກໍຕໍ່ເມື່ອຫາກລູກບໍ່ທັນເຖິງກະສຽນອາຍຸສິບແປດປີ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນວັກ 2 ມາດຕາ 32 ຂອງກົດໝາຍຄອບຄົວ.

ການພິຈາລະນາກ່ຽວກັບການປົດສິດໃນການເປັນລູກນັ້ນ ຈະດໍາເນີນໄດ້ກໍຕໍ່ເມື່ອລູກຜູ້ນັ້ນຫາກເຖິງກະສຽນອາຍຸສິບແປດປີແລ້ວ ແລະເປັນລູກເນລະຄຸນເປັນຕົ້ນ: ທໍາຮ້າຍຮ່າງກາຍ, ບັງຄັບນາບຂູ່ພໍ່, ແມ່, ບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ ຕາມຄໍາຕັດສິນຂອງສານ ແລະອື່ນໆ.

## ໝວດທີ4
## ສິດອຳນາດ ຂອງຄະນະສານເດັກ

### ມາດຕາ 60 ສິດອຳນາດ ຂອງຄະນະສານເດັກ

ຄະນະສານເດັກ ມີສິດອຳນາດຕັດສິນ:

1. ຄະດີ ກ່ຽວກັບການໃຊ້ແທນຄ່າເສັຍຫາຍ ເນື່ອງມາຈາກການກະທຳຂອງເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີລົງມາ;
2. ຄະດີເດັກ ກ່ຽວກັບແຮງງານ;
3. ຄະດີ ລະຫວ່າງເດັກດ້ວຍກັນ;
4. ຄະດີ ກ່ຽວກັບການລະເມີດສິດທິຂອງເດັກ.

ເມື່ອມີການພິຈາລະນາຄະດີເດັກແລ້ວ ເຖິງວ່າເດັກນັ້ນຈະມີຄວາມສາມາດທາງດ້ານການປະພຶດ ຫລືມີອາຍຸຄົບສິບແປດປີແລ້ວກໍຕາມ ກໍໃຫ້ຄະນະສານດັ່ງກ່າວສືບຕໍ່ພິຈາລະນາຈົນກວ່າຄະດີ ຈະສຳເລັດ. ຖ້າຫາກມີການຂໍອຸທອນ ແລະຂໍລຶບລ້າງ ກໍໃຫ້ຄະນະສານເດັກຂອງສານຂັ້ນເທິງ ມີສິດອຳນາດພິຈາລະນາຕໍ່ໄປ.

### ມາດຕາ 61 ການພິຈາລະນາຄະດີເດັກ

ໃນການພິຈາລະນາຄະດີເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸນັ້ນ ຕ້ອງໃຫ້ພໍ່ແມ່ ຫລືຜູ້ປົກຄອງເຂົ້າ ຮ່ວມນຳ ເປັນຕົ້ນໃນກໍລະນີທີ່ເດັກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ.

ສຳລັບການພິຈາລະນາບັນຫາອື່ນໆໃນຄະດີເດັກນັ້ນ ໃຫ້ດຳເນີນໄປຕາມລະບຽບການທົ່ວໄປ ແລະຕາມຂໍ້ມູນຫລັກຖານຕົວຈິງ.

## ໝວດທີ 5
## ຂໍ້ຂັດແຍ່ງ ກ່ຽວກັບສິດອຳນາດສານ

### ມາດຕາ 62 ສິດອຳນາດຂອງສານໃນການພິຈາລະນາຄະດີ

ສານປະຊາຊົນ ບ່ອນທີ່ເຫດການ ຫລືຂໍ້ຂັດແຍ່ງໄດ້ເກີດຂຶ້ນ ຫລືບ່ອນຊັບທີ່ເປັນພື້ນຖານຕັ້ງຢູ່ ຫລືບ່ອນທີ່ຈຳເລີຍຢູ່ ຫລືອາໄສຢູ່ນັ້ນ ເປັນສານທີ່ມີສິດອຳນາດຕັດສິນ.

ສານປະຊາຊົນເມືອງ, ເທດສະບານ ມີສິດອຳນາດພິຈາລະນາຕັດສິນຄະດີແພ່ງ ຊຶ່ງມີມູນຄ່າບໍ່ເກີນ 20.000.000 ກີບ ແລະຄະດີອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍວ່າ ດ້ວຍສານປະຊາຊົນ. ສານປະຊາຊົນແຂວງ, ນະຄອນ ມີສິດອຳນາດພິຈາລະນາຕັດສິນຄະດີແພ່ງ, ຄອບຄົວ ແລະເດັກ ທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ, ເທດສະບານ ແລະຄະດີການຄ້າ.

**ມາດຕາ 63 ຂໍ້ຂັດແຍ່ງ ກ່ຽວກັບສິດອຳນາດສານ**

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບສິດອຳນາດໃນການພິຈາລະນາຄະດີລະຫວ່າງສານດ້ວຍກັນ ວ່າຕົນມີສິດອຳນາດພິຈາລະນາຄະດີ ຫລືບໍ່ມີສິດອຳນາດພິຈາລະນາຄະດີນັ້ນ ໃຫ້ສານປະຊາຊົນບ່ອນໄດ້ຮັບຄຳຮ້ອງຟ້ອງ ສະເໜີຂຶ້ນໄປຍັງສານປະຊາຊົນສູງສຸດ ເພື່ອພິຈາລະນາອອກຄຳຊີ້ຂາດວ່າ ສານໃດມີສິດອຳນາດພິຈາລະນາຄະດີນັ້ນ.

ສິດໃນການທວງເອົາຄະດີ ແລະການສະເໜີສົ່ງຄະດີ ໃຫ້ປະຕິບັດຕາມມາດຕາ 31 ແລະມາດຕາ 41 ຂອງກົດໝາຍວ່າດ້ວຍສານປະຊາຊົນ.

**ມາດຕາ 64 ຂໍ້ຂັດແຍ່ງກ່ຽວກັບສິດອຳນາດຂອງຄະນະສານ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ກ່ຽວກັບສິດອຳນາດໃນການພິຈາລະນາຄະດີລະຫວ່າງຄະນະສານແພ່ງ ຫລືຄະນະສານການຄ້າ, ຄະນະສານຄອບຄົວ ຫລືຄະນະສານເດັກນັ້ນ ໃຫ້ປະທານສານປະຊາຊົນບ່ອນກ່ຽວຂ້ອງພິຈາລະນາອອກຄຳຊີ້ຂາດວ່າ ຄະນະສານໃດມີສິດອຳນາດພິຈາລະນາຄະດີນັ້ນ.

## ພາກທີ V
## ການດຳເນີນຄະດີຢູ່ສານຂັ້ນຕົ້ນ

**ມາດຕາ 65** ສານປະຊາຊົນທີ່ຕັດສິນເປັນຂັ້ນຕົ້ນ

ສານປະຊາຊົນເມືອງ, ເທດສະບານ ແລະສານປະຊາຊົນແຂວງ, ນະຄອນ ມີສິດຕັດສິນຄະດີເປັນຂັ້ນຕົ້ນຕາມຂໍ້ມູນຫລັກຖານ ແລະຕາມກົດໝາຍ.

### ໝວດທີ 1
### ການຍື່ນຄຳຮ້ອງຟ້ອງ

**ມາດຕາ 66 ຄຳຮ້ອງຟ້ອງ**

ຄຳຮ້ອງຟ້ອງແມ່ນເອກະສານຂອງບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດທີ່ຍື່ນຕໍ່ສານ ໂດຍອ້າງວ່າຕົນໄດ້ຮັບຄວາມເສຍຫາຍ ຍ້ອນຖືກຜູ້ອື່ນລະເມີດຫຼືໂຕ້ແຍ່ງສິດ ແລະຜົນປະໂຫຍດຂອງຕົນ.

ຄຳຮ້ອງຟ້ອງ ມີເນື້ອໃນຕົ້ນຕໍ ດັ່ງນີ້ :

- ຊື່ ຂອງສານທີ່ຄຳຮ້ອງຟ້ອງນັ້ນໄດ້ຍື່ນເຖິງ ;
- ຊື່ ແລະນາມສະກຸນ, ບ່ອນຢູ່ຂອງໂຈດ ແລະຈຳເລີຍ. ຖ້າວ່າໂຈດ ຫລືຈຳເລີຍ ຫາກແມ່ນນິຕິບຸກຄົນ ກໍໃຫ້ບອກບ່ອນທີ່ສຳນັກງານຂອງນິຕິບຸກຄົນນັ້ນຕັ້ງຢູ່ ພ້ອມທັງຊື່ ແລະນາມສະກຸນ ແລະບ່ອນຢູ່ຂອງຜູ້ຕາງໜ້າດ້ວຍ ;
- ເຫດການທີ່ເປັນສາເຫດພາໃຫ້ມີການຮ້ອງຟ້ອງ ແລະຫລັກຖານຢັ້ງຢືນເພື່ອໃຫ້ສານຕັດສິນ;
- ມູນຄ່າ ຂອງຄະດີ ;
- ການຮ້ອງຂໍ ຂອງໂຈດ ;

- ເອກະສານອື່ນໆ ທີ່ພົວພັນກັບຄະດີ ຄັດຕິດມາພ້ອມຄຳຮ້ອງຟ້ອງ.

ຄຳຮ້ອງຟ້ອງແມ່ນໃຫ້ໂຈດ ຫຼືຜູ້ຕາງໜ້າເຊັນຊື່ ຫຼືແປະໂປ້ມືໃສ່, ຕິດສະແຕັມ ແລະໃຫ້ຈ່າຍເງິນວາງສານແລ້ວແຕ່ກໍລະນີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄ່າທຳນຽມສານ. ສຳລັບຜູ້ຕາງໜ້ານັ້ນ ຕ້ອງໃຫ້ມີໃບມອບສັນທະຢ່າງຖືກຕ້ອງ.

**ມາດຕາ 67 ຄຳແກ້ຟ້ອງ ແລະຄຳຟ້ອງແຍ່ງ**

ຄຳແກ້ຟ້ອງແມ່ນເອກະສານຂອງຈຳເລີຍທີ່ຍື່ນຕໍ່ສານ ເພື່ອແກ້ຄຳຮ້ອງຟ້ອງຂອງໂຈດ ຖ້າເຫັນວ່າຄຳຮ້ອງຟ້ອງຂອງໂຈດຫາກບໍ່ມີມູນຄວາມຈິງ, ໂຈດຮ້ອງຂໍເອົາຄ່າເສັຍຫາຍ ຫຼືທວງເອົາຊັບສິ່ງຂອງຄືນເກີນຄວາມເປັນຈິງ ຫຼືຂາດເຫດການໃດໜຶ່ງທີ່ບໍ່ສາມາດຈະໃຫ້ສານພິຈາລະນາຕັດສິນໄດ້ ຜູ້ກ່ຽວມີສິດເຮັດຄຳແກ້ຟ້ອງຢ່າງມີເຫດມີຜົນ ໂດຍມີພະຍານ, ຫຼັກຖານມາຢັ້ງຢືນ.

ຄຳຟ້ອງແຍ່ງແມ່ນເອກະສານຂອງຈຳເລີຍທີ່ຍື່ນຕໍ່ສານ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ ຖ້າຫາກເຫັນວ່າໂຈດໄດ້ລະເມີດ, ໂຈດຍັງມີພັນທະປະຕິບັດຕໍ່ຕົນ ເພື່ອໃຫ້ສານພິຈາລະນາໄປພ້ອມດຽວກັນ.

**ມາດຕາ 68 ການຮັບຮູ້ ແລະການຖອນຄຳຮ້ອງຟ້ອງ**

ຈຳເລີຍ ມີສິດຮັບຮູ້ຄຳຮ້ອງຟ້ອງທັງໝົດ ຫຼືບາງສ່ວນ ຊຶ່ງໂຈດໄດ້ຍື່ນຟ້ອງຕົນຕໍ່ສານ. ການຮັບຮູ້ຄຳຮ້ອງຟ້ອງນັ້ນເປັນສາເຫດທີ່ພາໃຫ້ສານຕັດສິນ ໂດຍບໍ່ມີການໄຕ່ສວນຄະດີໃນທີ່ປະຊຸມສານຕື່ມອີກກໍໄດ້.

ໂຈດມີສິດຖອນຄຳຮ້ອງຟ້ອງທີ່ຕົນໄດ້ຍື່ນຟ້ອງຈຳເລີຍຕໍ່ສານແລ້ວນັ້ນຄືນທັງໝົດ ຫຼືບາງສ່ວນ. ໃນກໍລະນີທີ່ໂຈດຫາກໄດ້ຖອນບາງສ່ວນແລ້ວ ສານຈະພິຈາລະນາຕັດສິນພຽງແຕ່ສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ. ຖ້າວ່າໂຈດຫາກໄດ້ຖອນທັງໝົດ ກໍຈະພາໃຫ້ຄະດີນັ້ນສິ້ນສຸດລົງ ຍົກເວັ້ນຄະດີຢ່າຮ້າງ.

**ມາດຕາ 69** ການຮັບເອົາຄຳຮ້ອງຟ້ອງມາພິຈາລະນາ

ເມື່ອໂຈດຫາກໄດ້ຍື່ນຄຳຮ້ອງຟ້ອງຕໍ່ສານແລ້ວ ສານຕ້ອງຮັບເອົາຄຳຮ້ອງຟ້ອງນັ້ນມາພິຈາລະນາ ເວັ້ນເສັຍແຕ່ຄຳຮ້ອງຟ້ອງນັ້ນ ຫາກບໍ່ໄດ້ຖືກປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້; ໃນກໍລະນີນີ້ສານຕ້ອງແຈ້ງໃຫ້ໂຈດຊາບ ແລະກຳນົດເວລາໃຫ້ຜູ້ກ່ຽວເຂົ້າມາແກ້ໄຂຂໍ້ບົກພ່ອງທີ່ມີ. ຖ້າວ່າຜູ້ກ່ຽວຫາກບໍ່ເຂົ້າມາຕາມກຳນົດແລ້ວ ສານກໍຈະສົ່ງຄຳຮ້ອງຟ້ອງຄືນໃຫ້ໂຈດ.

ເມື່ອໄດ້ຮັບຄຳຮ້ອງຟ້ອງແລ້ວ ສານຕ້ອງຄົ້ນຄວ້າເບິ່ງວ່າຕົນມີສິດອຳນາດພິຈາລະນາຄະດີນັ້ນຫລືບໍ່.

ຖ້າຫາກສານເຫັນວ່າຕົນມີສິດອຳນາດພິຈາລະນາ ແລະຄຳຮ້ອງຟ້ອງນັ້ນ ຖືກຕ້ອງຕາມລະບຽບກົດໝາຍແລ້ວ ສານຕ້ອງສົ່ງຄຳຮ້ອງຟ້ອງດັ່ງກ່າວໃຫ້ຈຳເລີຍ ເພື່ອທຳການແກ້ຟ້ອງ ຫລືຟ້ອງແຍ່ງ;

ໃນກໍລະນີທີ່ຄູ່ຄວາມຫາກບໍ່ມີການຕົກລົງໄກ່ເກ່ຍຢູ່ສານແລ້ວ ສານຕ້ອງດໍາເນີນຄະດີຕາມເວລາທີ່ໄດ້ກໍານົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້, ທໍາການສອບສວນ ແລະປະກອບຫລັກຖານ ແລ້ວນໍາອອກພິຈາລະນາຕັດສິນໃນທີ່ປະຊຸມສານ.

**ມາດຕາ 70 ກໍານົດເວລາຂອງການພິຈາລະນາຄະດີ**

ເມື່ອໄດ້ຮັບຄໍາຮ້ອງຟ້ອງແລ້ວ ຄະນະສານຕ່າງໆຕ້ອງພິຈາລະນາຄະດີ ຕາມກໍານົດເວລາດັ່ງຕໍ່ໄປນີ້:

- ຄະດີແພ່ງ ໃຫ້ເລີ່ມດໍາເນີນຢ່າງຊ້າຫົກສິບວັນ. ສໍາລັບຄະດີກ່ຽວກັບແຮງງານ ແລະສາຍພົວພັນທາງດ້ານບໍລິຫານນັ້ນ ຕ້ອງເລີ່ມດໍາເນີນຢ່າງຊ້າສາມສິບວັນ;
- ຄະດີ ການຄ້າ ໃຫ້ເລີ່ມດໍາເນີນຢ່າງຊ້າສິບຫ້າວັນ;
- ຄະດີ ຄອບຄົວ ໃຫ້ເລີ່ມດໍາເນີນຢ່າງຊ້າສາມສິບວັນ;
- ຄະດີ ເດັກ ໃຫ້ເລີ່ມດໍາເນີນຢ່າງຊ້າສິບຫ້າວັນ.

**ມາດຕາ 71 ມາດຕະການຮັບປະກັນການຮ້ອງຟ້ອງ**

ຖ້າຫາກເຫັນວ່າມີຄວາມຈໍາເປັນ ເພື່ອຮັບປະກັນການໃຊ້ແທນໜີ້ສິນຕາມຄໍາຮ້ອງຟ້ອງ ສານຈະພິຈາລະນາວາງມາດຕະການໃດໜຶ່ງ ຕາມຄໍາຮ້ອງຂໍຂອງຄູ່ຄວາມໃນຄະດີ ຫລືຕາມຄໍາເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ ຫລືຂອງສັງຄົມ.

ມາດຕະການຮັບປະກັນການຮ້ອງຟ້ອງ ແບ່ງອອກເປັນປະເພດ ດັ່ງນີ້:

1. ຍຶດ ຫລືອາຍັດຊັບຂອງຈໍາເລີຍ ທີ່ຢູ່ນໍາຜູ້ກ່ຽວ ຫລືຢູ່ນໍາຜູ້ອື່ນ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ສິນ ແລະດອກເບ້ຍ;
2. ຫ້າມຈໍາເລີຍເຄື່ອນໄຫວວຽກງານໃດໜຶ່ງ ຫລືກະທໍາສິ່ງໃດໜຶ່ງ ທີ່ກ່ຽວຂ້ອງກັບຄະດີ;
3. ຫ້າມຈໍາເລີຍປະຕິບັດຂໍ້ຜູກພັນໃດໜຶ່ງ ທີ່ພົວພັນກັບຄະດີກັບຜູ້ອື່ນ;
4. ອອກມາດຕະການຮັບປະກັນການຮ້ອງຟ້ອງອື່ນໆ.

ການລະເມີດມາດຕະການທີ່ໄດ້ກ່າວໄວ້ເທິງນີ້ ຈະຖືກດໍາເນີນຄະດີຕາມທີ່ໄດ້ກໍານົດໄວ້ໃນມາດຕາ 162 ຂອງກົດໝາຍອາຍາ.

**ມາດຕາ 72 ການປ່ຽນແປງ ແລະການລຶບລ້າງມາດຕະການຮັບປະກັນການຮ້ອງຟ້ອງ**

ການປ່ຽນແປງປະເພດມາດຕະການຮັບປະກັນຄໍາຮ້ອງຟ້ອງ ຫລືການລຶບລ້າງມາດຕະການດັ່ງກ່າວ ຕ້ອງພິຈາລະນາໃນທີ່ປະຊຸມສານ ໂດຍການເຂົ້າຮ່ວມຂອງບຸກຄົນທີ່ກ່ຽວຂ້ອງໃນຄະດີນັ້ນ ແຕ່ການບໍ່ເຂົ້າຮ່ວມຂອງບຸກຄົນດັ່ງກ່າວ ກໍຈະບໍ່ພາໃຫ້ເປັນອຸປະສັກຕໍ່ການພິຈາລະນານັ້ນໄດ້.

ສານອາດຈະປ່ຽນແປງ ຫລືລຶບລ້າງມາດຕະການຮັບປະກັນການຮ້ອງຟ້ອງ ຕາມຄໍາຮ້ອງຂໍຂອງຄູ່ຄວາມ ຫລືຕາມຄໍາເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ ຫລືຂອງສັງຄົມ.

ໃນກໍລະນີທີ່ສານຫາກບໍ່ໄດ້ພິຈາລະນາປ່ຽນແປງ ຫລືລຶບລ້າງຕາມຄໍາຮ້ອງຂໍແລ້ວ ມາດຕະການທີ່ສານວາງອອກນັ້ນ ກໍຈະມີຜົນບັງຄັບປະຕິບັດ ຈົນກວ່າຈະມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

## ໝວດທີ 2
## ການສອບສວນ ແລະການປະກອບຫລັກຖານໃນຄະດີ

### ມາດຕາ 73 ການສອບສວນ

ພາຍຫລັງທີ່ໄດ້ຮັບຄໍາຮ້ອງຟ້ອງແລ້ວ ປະທານສານຈະມອບໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງກະກຽມຄະດີ ເພື່ອທໍາການສອບສວນ ແລະປະກອບຫລັກຖານໃຫ້ຄົບຖ້ວນ, ຖືກຕ້ອງ ແລະພາວະວິໄສ ແລ້ວຈຶ່ງນໍາອອກພິຈາລະນາຕັດສິນໃຫ້ທັນເວລາ.

ການສອບສວນ ຈະເຮັດຂຶ້ນດ້ວຍວິທີເອົາຄໍາໃຫ້ການຂອງຄູ່ຄວາມ, ພະຍານ, ບຸກຄົນອື່ນທີ່ເຂົ້າຮ່ວມໃນຄະດີ ຫລືທໍາການສອບສວນຊ້ອງໜ້າກໍໄດ້. ໃນການເອົາຄໍາໃຫ້ການນັ້ນ ຜູ້ພິພາກສາເປັນຜູ້ສອບສວນ, ຈ່າສານເປັນຜູ້ເຮັດບົດບັນທຶກ.

### ມາດຕາ 74 ບົດບັນທຶກຄໍາໃຫ້ການ

ໃນບົດບັນທຶກຄໍາໃຫ້ການນັ້ນຕ້ອງບົ່ງບອກ: ສະຖານທີ່, ວັນ, ເວລາ, ຊື່ ແລະນາມສະກຸນຂອງຜູ້ພິພາກສາ, ຊື່ ແລະນາມສະກຸນ, ຊີວະປະຫວັດຫຍໍ້ຂອງຜູ້ໃຫ້ການ ແລະອື່ນໆ ຊຶ່ງໄດ້ກໍານົດໄວ້ໃນແບບພິມ.

ເມື່ອໄດ້ເອົາຄໍາໃຫ້ການສິ້ນສຸດແລ້ວ ຜູ້ພິພາກສາຕ້ອງອ່ານເນື້ອໃນຂອງບົດບັນທຶກໃຫ້ຜູ້ໃຫ້ການຟັງ ຫລືໃຫ້ຜູ້ກ່ຽວອ່ານເອົາເອງກໍໄດ້. ຫລັງຈາກນັ້ນ ບັນດາຜູ້ເຂົ້າຮ່ວມໃນການເອົາຄໍາໃຫ້ການຕ້ອງພ້ອມກັນລົງລາຍເຊັນ ແລະແປະໂປ້ມືໃສ່ແຕ່ລະໜ້າ. ໃນກໍລະນີທີ່ເອົາຄໍາໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ປາກກືກ ແລະຄົນປັນຍາອ່ອນ, ເສັຍຈິດ ຕ້ອງໃຫ້ຜູ້ປົກປ້ອງລົງລາຍເຊັນ ແລະແປະໂປ້ມືໃສ່ ເພື່ອຢັ້ງຢືນຄໍາໃຫ້ການດັ່ງກ່າວ.

ຖ້າຫາກມີການຂີດຂ້າ ຫລືເພີ່ມເຕີມຂໍ້ຄວາມໃນບົດບັນທຶກແລ້ວ ຜູ້ພິພາກສາ, ຈ່າສານ ແລະຜູ້ໃຫ້ການຕ້ອງລົງລາຍເຊັນ ແລະແປະໂປ້ມື ຢັ້ງຢືນໄວ້ຕໍ່ໜ້າແຖວບ່ອນຂີດຂ້າ ຫລືເພີ່ມເຕີມນັ້ນ.

ໃນກໍລະນີທີ່ຜູ້ໃຫ້ການຫາກບໍ່ຍອມລົງລາຍເຊັນ ແລະບໍ່ຍອມແປະໂປ້ມືນັ້ນ ຜູ້ພິພາກສາຕ້ອງໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ.

ບົດບັນທຶກຄໍາໃຫ້ການນັ້ນ ໃຫ້ເຮັດເປັນສອງສະບັບ, ສະບັບໜຶ່ງປະກອບໃສ່ສໍານວນຄະດີ ແລະອີກສະບັບໜຶ່ງມອບໃຫ້ຜູ້ໃຫ້ການ.

**ມາດຕາ 75 ການພິສູດ**

ຜ່ານການດໍາເນີນຄະດີ ຖ້າຫາກມີຂໍ້ມູນຫລັກຖານໃດບໍ່ຈະແຈ້ງ ແລະມີຄວາມຈໍາເປັນຕ້ອງທໍາການພິສູດ ເປັນຕົ້ນບັນຊີ, ຕົວໜັງສື, ລາຍເຊັນ, ຕາປະທັບ, ຊັບສິ່ງຂອງ ຫລືສະຖານທີ່ຕ່າງໆ ຕາມຄໍາສະເໜີຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫລືຕາມຄໍາເຫັນຂອງສານແລ້ວ ສານຕ້ອງອອກຄໍາສັ່ງແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທໍາການພິສູດ. ໃນຄໍາສັ່ງນັ້ນ ຕ້ອງບົ່ງບອກບັນຫາທີ່ຈະຕ້ອງພິສູດ, ກໍານົດເວລາພິສູດ, ສິດ ແລະພັນທະຂອງຜູ້ຊ່ຽວຊານໃນການພິສູດນັ້ນ.

ສານຕ້ອງແຈ້ງຄໍາສັ່ງດັ່ງກ່າວໃຫ້ຄູ່ຄວາມ ຫລືບຸກຄົນອື່ນທີ່ກ່ຽວຂ້ອງຊາບ.

ການພິສູດ ອາດຈະເຮັດໂດຍຜູ້ຊ່ຽວຊານຜູ້ດຽວ, ຫລາຍຄົນ ຫລືຫລາຍເທື່ອກໍໄດ້.

ພາຍຫລັງການພິສູດໄດ້ສິ້ນສຸດລົງແລ້ວ ຜູ້ຊ່ຽວຊານຕ້ອງເຮັດບົດສະຫລຸບໃຫ້ຄວາມເຫັນຂອງຕົນ ຕາມຄວາມເປັນຈິງຂອງການພິສູດ ແລ້ວສົ່ງໃຫ້ສານຕາມກໍານົດເວລາທີ່ໄດ້ມອບໝາຍໃຫ້.

ຜູ້ຊ່ຽວຊານຈະໄດ້ຮັບຄ່າແຮງງານໃນເວລາປະຕິບັດວຽກງານຕາມການມອບຫມາຍຂອງສານຕາມລະບຽບການສະເພາະ. ສໍາລັບການໃຊ້ຈ່າຍໃນການພິສູດນັ້ນໃຫ້ປະຕິບັດຕາມວັກ 1 ມາດຕາ 10 ຂອງກົດໝາຍວ່າດ້ວຍຄ່າທໍານຽມສານ.

**ມາດຕາ 76 ການຍຶດ ແລະການອາຍັດຊັບ**

ໃນກໍລະນີທີ່ໄດ້ຮູ້ແຈ້ງ ກ່ຽວກັບປະເພດ, ຈໍານວນ, ບັນຊີຊັບ ຫລືສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າທີ່ພົວພັນກັບຄະດີ, ເປັນປະໂຫຍດໃຫ້ແກ່ການດໍາເນີນຄະດີ ຫລືເພື່ອຮັບປະກັນການຮ້ອງຟ້ອງ ຕາມຄໍາຮ້ອງຂໍຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫລືຕາມຄໍາເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ ຫລືຂອງສັງຄົມແລ້ວ ສານຈະອອກຄໍາສັ່ງຍຶດ ຫລືອາຍັດຊັບໄວ້ຕາມແຕ່ລະກໍລະນີ.

**ມາດຕາ 77 ການມອບໃຫ້ສານອື່ນສອບສວນແທນ**

ເມື່ອຄູ່ຄວາມ, ພະຍານ ຫລືບຸກຄົນອື່ນທີ່ເຂົ້າຮ່ວມໃນຄະດີ ຫາກບໍ່ສາມາດເຂົ້າມາໃຫ້ການຕໍ່ສານ ເນື່ອງຈາກຢູ່ທ້ອງຖິ່ນຕ່າງກັນ ຫລືຍ້ອນສາເຫດອື່ນແລ້ວ ສານທີ່ດໍາເນີນຄະດີນັ້ນ ຈະສົ່ງປະເດັນການສອບສວນໃຫ້ສານທ້ອງຖິ່ນອື່ນບ່ອນທີ່ບຸກຄົນດັ່ງກ່າວຢູ່ນັ້ນດໍາເນີນແທນກໍໄດ້, ພາຍຫລັງທີ່ສອບສວນແລ້ວບົດບັນທຶກ ຫລືຫລັກຖານທີ່ເກັບກໍາໄດ້ ຕ້ອງສົ່ງໃຫ້ສານທີ່ມອບໝາຍນັ້ນໃນທັນໃດ.

**ມາດຕາ 78 ການປະກອບ ແລະການຕີລາຄາຫລັກຖານ**

ພາຍຫລັງທີ່ໄດ້ເອົາຄໍາໃຫ້ການຂອງຄູ່ຄວາມ, ພະຍານ ແລະເກັບກໍາຂໍ້ມູນຫລັກຖານ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແລ້ວ ຜູ້ພິພາກສາຕ້ອງໄຈ້ແຍກ, ຊັ່ງຊາຕີລາຄາຫລັກຖານດັ່ງກ່າວ ເພື່ອກໍານົດເຫດການຂອງຄະດີໃຫ້ຖືກຕ້ອງຕາມຄວາມຈິງ ແລະວາງມາດຕາຂອງກົດໝາຍທີ່ກ່ຽວຂ້ອງໃສ່.

ຫລັກຖານໃດທີ່ບໍ່ເປັນພື້ນຖານໃນຄະດີນັ້ນ ກໍໃຫ້ວິນິດໄສໃນຄໍາຕັດສິນຂອງສານ.

## ໝວດທີ 3
## ການໄກ່ເກັ່ຍຄູ່ຄວາມ

### ມາດຕາ 79 ການໄກ່ເກັ່ຍຄູ່ຄວາມ

ຂໍ້ຂັດແຍ່ງເລັກນ້ອຍ, ບໍ່ມີມູນຄ່າສູງເຊັ່ນ: ສາຍພົວພັນຄອບຄົວ, ກໍາມະສິດກ່ຽວກັບສັດລ້ຽງ, ຂໍທາງຜ່ານ ແລະອື່ນໆ ຕ້ອງໃຫ້ໜ່ວຍໄກ່ເກັ່ຍຂັ້ນບ້ານທໍາການໄກ່ເກັ່ຍເສັຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ກໍໃຫ້ຫ້ອງການຍຸຕິທໍາເມືອງທໍາການສຶກສາອົບຮົມ, ປະນີປະນອມ ແລະໄກ່ເກັ່ຍຄູ່ຄວາມຕື່ມອີກຕາມລະບຽບການຂອງໜ່ວຍໄກ່ເກັ່ຍຂັ້ນບ້ານ ແລະຫ້ອງການຍຸຕິທໍາເມືອງ ຖ້າຫາກໄກ່ເກັ່ຍກັນບໍ່ໄດ້ຈຶ່ງໃຫ້ສານພິຈາລະນາຕາມກົດໝາຍ ຖ້າຫາກມີຄໍາຮ້ອງຟ້ອງ. ເມື່ອຄໍາຮ້ອງຟ້ອງໄດ້ຍື່ນຂຶ້ນສານແລ້ວຄະນະສານຈະທໍາການໄກ່ເກັ່ຍຄູ່ຄວາມຕື່ມອີກກໍໄດ້.

ສໍາລັບຂໍ້ຂັດແຍ່ງທີ່ມີມູນຄ່າສູງນັ້ນ ຄູ່ຄວາມກໍມີສິດສະເໜີໃຫ້ທໍາການໄກ່ເກັ່ຍ ຕາມທີ່ໄດ້ກໍານົດໄວ້ເທິງນີ້ ຫລືຮ້ອງຟ້ອງຕໍ່ສານໂດຍກົງກໍໄດ້.

ການໄກ່ເກ່ຍນັ້ນຈະດໍາເນີນໄດ້ກໍຕໍ່ເມື່ອຫາກບໍ່ຂັດກັບຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

### ມາດຕາ 80 ຜົນຂອງການໄກ່ເກັ່ຍຄູ່ຄວາມ

ເມື່ອຄູ່ຄວາມຫາກຕົກລົງກັນໄດ້ຕາມການໄກ່ເກັ່ຍແລ້ວ ໜ່ວຍໄກ່ເກັ່ຍຂັ້ນບ້ານ, ຫ້ອງການຍຸຕິທໍາເມືອງ ຕ້ອງເຮັດບົດບັນທຶກ ແລະໃຫ້ຄູ່ຄວາມນັ້ນລົງລາຍເຊັນ ແລະແປະໂປ້ມືໄວ້ເປັນຫລັກຖານ, ບົດບັນທຶກກ່ຽວກັບການໄກ່ເກັ່ຍດັ່ງກ່າວ ຈະມີຜົນໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ໃນກໍລະນີທີ່ມີການໄກ່ເກັ່ຍຢູ່ສານ ຄໍາຕົກລົງຂອງການໄກ່ເກັ່ຍນັ້ນຈະມີຜົນບັງຄັບປະຕິບັດຄືກັບຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ. ຄໍາສັ່ງໃຫ້ປະຕິບັດນັ້ນຕ້ອງເຮັດຂຶ້ນພາຍໃນຫ້າວັນ ນັບແຕ່ວັນໄກ່ເກັ່ຍເປັນຕົ້ນໄປ.

ສານຈະບໍ່ນໍາເອົາຄະດີທີ່ຄູ່ຄວາມໄດ້ໄກ່ເກັ່ຍກັນຢູ່ສານແລ້ວນັ້ນ ມາພິຈາລະນາຕື່ມອີກ.

## ໝວດທີ 4
## ຂັ້ນຕອນການພິຈາລະນາຄະດີຂອງສານຂັ້ນຕົ້ນ

### ມາດຕາ 81 ການກະກຽມໃຫ້ແກ່ການໄຕ່ສວນຄະດີ

ໃນການກະກຽມເປີດປະຊຸມສານ ຕ້ອງກວດເບິ່ງວ່າຄະດີນັ້ນ ມີຫລັກຖານພຽງພໍແລ້ວ ຫລືບໍ່, ມີຄວາມພ້ອມຈະນໍາອອກຕັດສິນໄດ້ ຫລືບໍ່, ຄົ້ນຄວ້າແລະກວດເບິ່ງວ່າຄະນະສານທີ່ປະກອບຂຶ້ນ ເພື່ອ

ທຳການຕັດສິນນັ້ນມີຜູ້ໃດຈະຂໍຖອນຕົວ. ນອກຈາກນີ້ ຖ້າຫາກເຫັນວ່າຄະດີຍັງມີສ່ວນກ່ຽວພັນກັບບຸກຄົນທີສາມແລ້ວ ສານຈຳເປັນຕ້ອງໄດ້ນຳຕົວບຸກຄົນດັ່ງກ່າວ ເຂົ້າມາດຳເນີນດັ່ງດຽວກັນກັບຄູ່ຄວາມໃນຄະດີ.

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງໃຫ້ມີການເຂົ້າຮ່ວມຂອງຄູ່ຄວາມໃນຄະດີ ເວັ້ນເສັຍແຕ່ຄະດີກ່ຽວກັບຜູ້ຫາຍສາບສູນ ຫລືຄົນເສັຍຈິດ ຊຶ່ງບໍ່ຈຳເປັນຈະໃຫ້ເຂົ້າມາສານ. ສຳລັບຄະດີກ່ຽວກັບເດັກນັ້ນ ຍັງຕ້ອງໃຫ້ພໍ່ແມ່ ຫລືຜູ້ປົກຄອງເດັກເຂົ້າຮ່ວມນຳອີກດ້ວຍ.

ກ່ອນການເປີດປະຊຸມສານນັ້ນ ຈ່າສານຕ້ອງໄດ້ກວດເບິ່ງວ່າຄູ່ຄວາມໃນຄະດີ, ບຸກຄົນທີສາມ, ພະຍານ ແລະບຸກຄົນອື່ນ ທີ່ຖືກຮຽກນັ້ນ ມາຄົບຖ້ວນແລ້ວ ຫລືບໍ່, ນອກຈາກນີ້ຈ່າສານຍັງຕ້ອງໄດ້ປະກາດລະບຽບຂອງການປະຊຸມສານໃຫ້ບຸກຄົນເຫລົ່ານີ້ຮັບຊາບ ແລະປະຕິບັດອີກດ້ວຍ.

ລະບຽບຂອງການປະຊຸມສານຈະໄດ້ກຳນົດໄວ້ສະເພາະ.

**ມາດຕາ 82 ການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ**

ການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ ຕ້ອງເຮັດໂດຍກົງ, ທາງປາກເປົ່າ, ຢ່າງເປີດເຜີຍ ຫລືປິດລັບໃນບາງກໍລະນີ, ມີການໂຕ້ຖຽງ, ເຮັດຢ່າງຕໍ່ເນື່ອງກັນ ແລະໂດຍບໍ່ມີການສັບປ່ຽນຄະນະສານ.

ປະທານຄະນະສານ ມີໜ້າທີ່ນຳພາການໄຕ່ສວນຄະດີຢ່າງເປັນກາງໃນທີ່ປະຊຸມສານ.

ພາຍຫລັງທີ່ໄດ້ປະກາດເປີດປະຊຸມສານແລ້ວ ປະທານຄະນະສານຕ້ອງແຈ້ງລາຍຊື່ຄະນະສານ, ໄອຍະການປະຊາຊົນ, ຈ່າສານ, ຄະດີທີ່ຈະນຳອອກພິຈາລະນາ, ແຈ້ງສິດໃນການຄ້ານຕົວຄະນະສານ ຫລືບຸກຄົນໃດບຸກຄົນໜຶ່ງໃນຄະນະສານ, ໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ແລະຜູ້ແປພາສາ ແລ້ວແຈ້ງສິດຕ່າງໆໃຫ້ຄູ່ຄວາມ ແລະຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີຊາບ. ຖ້າຫາກມີການປ່ຽນແປງບຸກຄົນດັ່ງກ່າວຍ້ອນການຄ້ານຕົວນັ້ນ ຄະນະສານກໍຕ້ອງປິດການປະຊຸມສານໄວ້ຊົ່ວຄາວ ເພື່ອພິຈາລະນາຕົກລົງກ່ຽວກັບບັນຫານີ້.

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງເລີ່ມຕົ້ນຈາກການລາຍງານເນື້ອໃນຄະດີ ຫລັງຈາກນັ້ນໃຫ້ໂຈດ ແລະບຸກຄົນທີສາມທາງຝ່າຍໂຈດ (ຖ້າມີ) ຢັ້ງຢືນການຮ້ອງຟ້ອງຂອງຕົນ. ຖັດຈາກນັ້ນຈຶ່ງໃຫ້ຈຳເລີຍມີຄຳເຫັນວ່າຕົນຮັບຮູ້ຄຳຮ້ອງຟ້ອງຂອງໂຈດນັ້ນ ຫລືບໍ່. ຈາກນັ້ນກໍໃຫ້ໂຈດມີຄຳເຫັນວ່າຕົນຮັບຮູ້ຄຳຟ້ອງແຍ່ງຂອງຈຳເລີຍ (ຖ້າມີ) ນັ້ນ ຫລືບໍ່.

ໃນກໍລະນີທີ່ຈຳເລີຍ ຫາກໄດ້ປະຕິເສດຄຳຮ້ອງຟ້ອງຂອງໂຈດ ຫລືໂຈດຫາກໄດ້ປະຕິເສດຄຳຟ້ອງແຍ່ງຂອງຈຳເລີຍ ແລະບໍ່ສາມາດໄກ່ເກັ່ຍກັນໄດ້ແລ້ວ ປະທານຄະນະສານກໍເລີ່ມສອບຖາມໂຈດ ແລະບຸກຄົນທີສາມທາງຝ່າຍໂຈດ (ຖ້າມີ) ແລ້ວຈຶ່ງເອົາຈຳເລີຍ ແລະບຸກຄົນທີສາມທາງຝ່າຍຈຳເລີຍ (ຖ້າມີ), ພະຍານ ແລະຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີມາສອບຖາມຕາມລຳດັບ.

ຖ້າຫາກມີການສັບປ່ຽນຄະນະສານນັ້ນ ຕ້ອງດຳເນີນການໄຕ່ສວນຄືນໃໝ່.

**ມາດຕາ 83 ການໂຕ້ຖຽງຂອງຄູ່ຄວາມ ແລະການຖະແຫລງຂອງໄອຍະການປະຊາຊົນ**

ການໂຕ້ຖຽງຂອງຄູ່ຄວາມ ແມ່ນການອອກຄຳຄິດຄຳເຫັນທີ່ມີລັກສະນະໂຕ້ແຍ່ງຂອງໂຈດ ແລະຈຳເລີຍ ກ່ຽວກັບຄວາມເປັນຈິງໃນຄະດີ.

ສານນຳເອົາບັນດາຫລັກຖານໃນຄະດີມາສະເໜີຕໍ່ທີ່ປະຊຸມສານແລ້ວ ເປີດການໂຕ້ຖຽງ ລະຫວ່າງໂຈດ ແລະຈຳເລີຍ ພ້ອມທັງຜູ້ປົກປ້ອງຂອງຜູ້ກ່ຽວ (ຖ້າມີ).

ໂຈດ ແລະຈຳເລີຍ ຕ້ອງນຳເອົາເອກະສານ ຫລືຫລັກຖານຕ່າງໆທີ່ຕົນມີ ແລະເປັນຜົນປະໂຫຍດໃຫ້ແກ່ຕົນອອກມາສະເໜີຕໍ່ສານຕື່ມອີກກໍໄດ້. ຄະນະສານຕ້ອງວາງຕົວເປັນກາງໃນການຊັກຖາມໂຈດ ແລະຈຳເລີຍດ້ວຍເຫດຜົນຢ່າງມີຈຸດສຸມ.

ໃນການໂຕ້ຖຽງນັ້ນ ຕ້ອງໃຫ້ແຕ່ລະຝ່າຍມີຄຳເຫັນໂຕ້ຕອບກັນ ເພື່ອຊອກຫາຄວາມຖືກຕ້ອງ ແລະຄວາມເປັນຈິງໃນຄະດີ.

ພາຍຫຼັງທີ່ການໂຕ້ຖຽງໄດ້ສິ້ນສຸດລົງແລ້ວ ປະທານຄະນະສານ ກໍສະເໜີໃຫ້ໄອຍະການປະຊາຊົນຂຶ້ນຖະແຫລງກ່ຽວກັບຄະດີທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ. ຈາກນັ້ນປະທານຄະນະສານກໍຈະປິດການໂຕ້ຖຽງ ແລະປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາຕັດສິນຄະດີໃນຫ້ອງປະຊຸມລັບ.

**ມາດຕາ 84 ການພິຈາລະນາຄະດີໃນຫ້ອງປະຊຸມລັບ**

ການພິຈາລະນາຄະດີໃນຫ້ອງປະຊຸມລັບ ຕ້ອງເຮັດຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ ແລະພາວະວິໄສ ໂດຍອີງໃສ່ຜົນຂອງການໄຕ່ສວນຄະດີໃນທີ່ປະຊຸມສານເປັນຕົ້ນຕໍ ເພື່ອໃຫ້ຄຳຕັດສິນຖືກຕ້ອງ ແລະຍຸຕິທຳ.

ການລົງຄຳເຫັນຊີ້ຂາດໃນຫ້ອງປະຊຸມລັບ ຕ້ອງຖືເອົາຕາມສຽງສ່ວນຫຼາຍໂດຍໃຫ້ຄະນະສານຜູ້ທີ່ຄຸນວຸດທິຫລຸດຫມູ່ເປັນຜູ້ອອກຄຳເຫັນ ແລະອອກສຽງກ່ອນ, ສ່ວນປະທານຄະນະສານອອກຄຳເຫັນ ແລະອອກສຽງເປັນຜູ້ສຸດທ້າຍ.

ຜູ້ທີ່ບໍ່ເຫັນດີຕາມສຽງສ່ວນຫລາຍນັ້ນ ກໍມີສິດສະແດງຄຳເຫັນຂອງຕົນເປັນລາຍລັກອັກສອນໄວ້ໃນສຳນວນຄະດີ ເພື່ອໃຫ້ສານຂັ້ນເທິງພິຈາລະນາ ໃນກໍລະນີມີການຂໍອຸທອນ ຫລືຂໍລົບລ້າງ.

**ມາດຕາ 85 ການອ່ານຄຳຕັດສິນໃນທີ່ປະຊຸມສານ**

ພາຍຫລັງທີ່ໄດ້ພິຈາລະນາຕັດສິນຄະດີໃນຫ້ອງປະຊຸມລັບແລ້ວ ປະທານພອ້ມດ້ວຍຄະນະສານ ຕ້ອງນຳເອົາຄຳຕັດສິນອອກມາອ່ານໃນທີ່ປະຊຸມສານຢ່າງເປີດເຜີຍ ພ້ອມທັງແຈ້ງສິດໃນການຂໍອຸທອນຄຳຕັດສິນຂອງສານ.

ຖ້າຫາກວ່າບໍ່ສາມາດອ່ານຄຳຕັດສິນໃນມື້ນັ້ນໄດ້ ກໍໃຫ້ເລື່ອນການອ່ານຄຳຕັດສິນໄປໃສ່ມື້ໃໝ່ແຕ່ຢ່າງຊ້າບໍ່ໃຫ້ກາຍເຈັດວັນ.

**ມາດຕາ 86 ການບັນທຶກປຶ້ມປະຊຸມສານ**

ໃນການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງໃຫ້ມີຈ່າສານນັ່ງນຳ ເພື່ອຈົດບັນທຶກຄຳໃຫ້ການ ແລະຄຳເຫັນໂຕ້ຕອບກັນ. ສຳລັບບັນຫາທີ່ສຳຄັນ ປະທານຄະນະສານແນະນຳໃຫ້ຈ່າສານຈົດບັນທຶກ ຖ້ອຍຄຳຂອງຄູ່ຄວາມທີ່ໃຫ້ການໃນເວລາໄຕ່ສວນຄະດີນັ້ນ ໄວ້ໃນປຶ້ມປະຊຸມສານ. ໃນເວລາເລີກປະຊຸມສານແຕ່ລະຄັ້ງຈ່າສານ ຕ້ອງໃຫ້ບຸກຄົນທີ່ເຂົ້າຮ່ວມໃນທີ່ປະຊຸມສານ ໂດຍສະເພາະໂຈດ, ຈຳເລີຍ, ພະຍານໃນຄະດີຕະຫຼອດທັງຄະນະສານ, ໄອຍະການປະຊາຊົນ ແລະຈ່າສານເອງກໍລົງລາຍເຊັນແລະແປະໂປ້ມືໃສ່ປຶ້ມປະຊຸມສານໄວ້.

ເມື່ອມີການຂໍອຸທອນຄຳຕັດສິນຂອງສານແລ້ວ ຈ່າສານຕ້ອງສຳເນົາບັນທຶກປຶ້ມປະຊຸມສານ ແລ້ວປະກອບໃສ່ສຳນວນຄະດີ ເພື່ອໃຫ້ສານຂັ້ນເທິງໄດ້ກວດກາ.

**ມາດຕາ 87 ການໂຈະການໄຕ່ສວນຄະດີ**

ການໂຈະການໄຕ່ສວນຄະດີ ແມ່ນການຢຸດການປະຊຸມສານໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງທີ່ເປັນອຸບປະສັກຕໍ່ການໄຕ່ສວນຄະດີນັ້ນ.

ການໄຕ່ສວນຄະດີໃນທີ່ປະຊຸມສານ ອາດຈະໂຈະໄວ້ໃນກໍລະນີທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫາກໄດ້ສູນເສຍຄວາມສາມາດທາງດ້ານການປະພຶດ ຫລືຖືກເຈັບເປັນຢ່າງກະທັນຫັນ, ຖ້າວ່າຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫາກໄດ້ເສັຍຊີວິດ, ອົງການຈັດຕັ້ງ ຫລືວິສາຫະກິດ ຫາກໄດ້ຍຸບເລີກໂດຍຄູ່ຄວາມຝ່າຍນັ້ນ, ອົງການຈັດຕັ້ງ ຫລືວິສາຫະກິດນັ້ນ ຍັງມີຜູ້ສືບທອດສິດ ແລະພັນທະຢູ່ ຫລືຖ້າຫາກວ່າມີຄວາມຈຳເປັນຕ້ອງລໍຖ້າໃຫ້ມີການພິຈາລະນາຄະດີອື່ນ ທີ່ພົວພັນກັບຄະດີທີ່ກຳລັງໄຕ່ສວນຢູ່ນີ້ກ່ອນ ແລະໃນກໍລະນີອື່ນໆ.

**ມາດຕາ 88 ການເລື່ອນການໄຕ່ສວນຄະດີ**

ການໄຕ່ສວນຄະດີໃນທີ່ປະຊຸມສານອາດຈະຖືກເລື່ອນ ໃນກໍລະນີທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫາກບໍ່ໄດ້ເຂົ້າມາຮ່ວມໃນທີ່ປະຊຸມສານຍ້ອນບໍ່ໄດ້ຮັບຫມາຍຮຽກ ຫລືມີເຫດຜົນໜັກແໜ້ນທີ່ພາໃຫ້ສານເຊື່ອຖືເອົາໄດ້ ແລະຖ້າຫາກວ່າມີຄວາມຈຳເປັນຕ້ອງຫວງເອົາຫລັກຖານໃໝ່ ຫລືຜູ້ເຂົ້າຮ່ວມໃນຄະດີຜູ້ໃດຜູ້ໜຶ່ງທີ່ມີຄວາມສຳຄັນຕໍ່ການພິຈາລະນາຄະດີນັ້ນ ບໍ່ມາຮ່ວມໃນທີ່ປະຊຸມສານ ເວັ້ນເສັຍແຕ່ມີການຕັດສິນລັບຫລັງ.

ການເລື່ອນການໄຕ່ສວນຄະດີ ຕ້ອງດຳເນີນກ່ອນການປິດການໂຕ້ຖຽງ.

**ມາດຕາ 89 ການຕັດສິນຊ້ອງໜ້າ ແລະການຕັດສິນລັບຫລັງ**

ການຕັດສິນຊ້ອງໜ້າ ແມ່ນການຕັດສິນຂອງສານທີ່ໂຈດ ແລະຈຳເລີຍ ເຂົ້າຮ່ວມໃນການພິຈາລະນາຄະດີ ຍົກເວັ້ນການພິຈາລະນາພິພາກສາຄະດີຢູ່ສານຂັ້ນລົບລ້າງ.

ໃນກໍລະນີທີ່ໂຈດ ຫລືຈໍາເລີຍຫາກໄດ້ຮັບໝາຍຮຽກເຂົ້າມາຮ່ວມປະຊຸມສານແລ້ວ ແຕ່ບໍ່ໄດ້ເຂົ້າມາຮ່ວມໂດຍບໍ່ມີເຫດຜົນພຽງພໍ ຫລືຜູ້ກ່ຽວໄດ້ສະເໜີໃຫ້ພິຈາລະນາຕັດສິນຄະດີນັ້ນໂລດ, ການພິຈາລະນາຕັດສິນຄະດີດັ່ງກ່າວ ຖືວ່າເປັນການຕັດສິນຊ້ອງໜ້າ; ໃນກໍລະນີນີ້ຜູ້ກ່ຽວບໍ່ມີສິດຂໍຄັດຄ້ານຄໍາຕັດສິນ ພຽງແຕ່ມີສິດຂໍອຸທອນເທົ່ານັ້ນ;

ໃນກໍລະນີທີ່ມີຂໍ້ມູນຫລັກຖານຄົບຖ້ວນ, ມີຄວາມຈໍາເປັນຕ້ອງໄດ້ຕັດສິນຄະດີ ແຕ່ຈໍາເລີຍຫລົບຫລີກການດໍາເນີນຄະດີ, ໂຈດ ຫລືຈໍາເລີຍ ບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຍ້ອນສາເຫດໃດໜຶ່ງເຊັ່ນ ໝາຍຮຽກສິ່ງບໍ່ເຖິງມືຜູ້ກ່ຽວ ສານກໍຈະຕັດສິນລັບຫລັງ ຊຶ່ງຜູ້ກ່ຽວມີສິດຂໍຄັດຄ້ານໄດ້ພາຍໃນກໍານົດ ສິບຫ້າວັນ ນັບແຕ່ມື້ໄດ້ ຮັບຊາບຄໍາຕັດສິນເປັນຕົ້ນໄປ.

ໃນກໍລະນີນີ້ ສານຄະນະເກົ່າຕ້ອງຕັດສິນຄະດີນັ້ນຄືນໃໝ່ ໂດຍຊ້ອງໜ້າຜູ້ກ່ຽວຕາມລະບຽບການພິຈາລະນາຄະດີຢູ່ສານ.

## ມາດຕາ 90 ການບໍ່ນໍາເອົາຄະດີມາພິຈາລະນາ

ການບໍ່ນໍາເອົາຄະດີມາພິຈາລະນາມີກໍລະນີດັ່ງນີ້:

1. ຄະດີທີ່ມີຄໍາຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດແລ້ວ;
2. ຄະດີໄດ້ຖືກໄກ່ເກ່ຍຢູ່ສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້,
3. ຄະດີທີ່ໝົດອາຍຸຄວາມໃນການຮ້ອງຟ້ອງແລ້ວ;
4. ຄະດີຊຶ່ງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫລືຜູ້ທີ່ບໍ່ມີສິດໃນການຕາງໜ້າເປັນຜູ້ຮ້ອງຟ້ອງ;
5. ຄະດີທີ່ຄໍາຮ້ອງຟ້ອງບໍ່ໄດ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້.

ສໍາລັບຂໍ້ 4 ແລະ 5 ນັ້ນ ຄູ່ຄວາມສາມາດແກ້ໄຂການຮ້ອງຟ້ອງຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອໃຫ້ສານຮັບມາພິຈາລະນາ.

ຄະນະສານ ຕ້ອງອອກຄໍາຕົກລົງກ່ຽວກັບການທີ່ບໍ່ນໍາເອົາຄະດີມາພິຈາລະນາ.

## ມາດຕາ 91 ການຊັດມ້ຽນຄະດີ

ການຊັດມ້ຽນຄະດີ ແມ່ນການຢຸດເຊົາການດໍາເນີນຄະດີ ເນື່ອງຈາກວ່າຜ່ານການດໍາເນີນຄະດີເຫັນວ່າໂຈດໃນຄະດີນັ້ນ ບໍ່ມີສິດຮ້ອງຟ້ອງກ່ຽວກັບບັນຫາທີ່ກ່ຽວຂ້ອງ, ຄະດີທີ່ທໍາການຮ້ອງຟ້ອງຢູ່ນັ້ນໄດ້ມີຄໍາສັ່ງຊັດມ້ຽນ ຫລືມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານມາກ່ອນແລ້ວ ຫລືຄະດີຊຶ່ງໂຈດໄດ້ຖອນຄໍາຮ້ອງຟ້ອງແລ້ວ.

ໃນການຊັດມ້ຽນຄະດີນັ້ນ ໃຫ້ອອກເປັນຄໍາສັ່ງຂອງຄະນະສານ.

ຄະດີ ທີ່ຖືກຊັດມ້ຽນໄວ້ແລ້ວນັ້ນ ຈະບໍ່ຖືກນໍາມາພິຈາລະນາຄືນໃໝ່ອີກ.

**ມາດຕາ 92 ການຄັດຄ້ານຄຳຕັດສິນໂດຍບຸກຄົນທີສາມ**

ບຸກຄົນທີສາມມີສິດຄັດຄ້ານຄຳຕັດສິນຂອງສານຖ້າຫາກວ່າ:

- ຄຳຕັດສິນຂອງສານໄດ້ແຕະຕ້ອງເຖິງສິດ ແລະຜົນປະໂຫຍດອັນຊອບທຳຂອງຕົນໂດຍທີ່ຕົນບໍ່ແມ່ນຄູ່ຄວາມໃນຄະດີ;

- ບຸກຄົນທີສາມ ໃນຖານະເປັນຝ່າຍໂຈດ ຫລືຈຳເລີຍ ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ແຕ່ໃນເວລາຕັດສິນ ສານບໍ່ໄດ້ຮຽກຜູ້ກ່ຽວ ຫລືຜູ້ກ່ຽວບໍ່ໄດ້ຮັບໝາຍຮຽກເຂົ້າມາຮ່ວມໃນວັນປະຊຸມສານ.

ການຄັດຄ້ານຄຳຕັດສິນຂອງສານໂດຍບຸກຄົນທີສາມ ໃຫ້ປະຕິບັດດັ່ງດຽວກັນກັບການຕັດສິນລັບຫລັງ.

**ມາດຕາ 93 ປະເພດຄຳຕັດສິນຂອງສານຂັ້ນຕົ້ນ**

ປະເພດຄຳຕັດສິນຄະດີຂອງສານຂັ້ນຕົ້ນ ມີດັ່ງນີ້:

1. ຖ້າຫາກເຫັນວ່າຄຳຮ້ອງຟ້ອງຂອງໂຈດ ຫລືຄຳຟ້ອງແຍ່ງຂອງຈຳເລີຍບໍ່ມີເຫດຜົນພຽງພໍ ສານຕ້ອງຕັດສິນຍົກເລີກຄຳຮ້ອງຟ້ອງຂອງໂຈດ ຫລືຄຳຟ້ອງແຍ່ງຂອງຈຳເລີຍ;
2. ຖ້າຫາກເຫັນວ່າ ຄຳຮ້ອງຟ້ອງຂອງໂຈດ ຫລືຄຳຟ້ອງແຍ່ງຂອງຈຳເລີຍ ມີເຫດຜົນພຽງພໍ ສານຕ້ອງລົງຄຳຕັດສິນ:
    - ໃຫ້ຈຳເລີຍໃຊ້ແທນຄ່າເສັຍຫາຍ ຫລືຄ່າປັບໃໝ ຫລືຄ່າປ່ວຍການຊັບແກ່ໂຈດຕາມແຕ່ລະກໍລະນີ ຫລືກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;
    - ໃຫ້ຈຳເລີຍ ສົ່ງຊັບສິ່ງຂອງເຊັ່ນ: ພາຫະນະ, ສັດ ຄືນແກ່ໂຈດ ໃນກໍລະນີທີ່ແມ່ນການຢືມໄປໃຊ້ ຫລືກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;
    - ໃຫ້ຈຳເລີຍ ສົ່ງເງິນຕົ້ນທຶນພ້ອມດ້ວຍດອກເບັ້ຍ (ຖ້າມີ) ຄືນແກ່ໂຈດ ໃນກໍລະນີທີ່ແມ່ນການກູ້ຢືມ ຫລືກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;
    - ໃຫ້ຈຳເລີຍຍົກຍ້າຍອອກຈາກທີ່ດິນ ຫລືເຮືອນຂອງໂຈດ ໃນກໍລະນີທີ່ແມ່ນການເຊົ່າ ຫລືການຕົກລົງອື່ນໆ ຫລືກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;
    - ໃຫ້ໂຈດ ແລະຈຳເລີຍຂາດຈາກສາຍຜົວເມັຍ ຖ້າຫາກແມ່ນການຢ່າຮ້າງ;
    - ໃຫ້ຈຳເລີຍ ຈ່າຍຄ່າລ້ຽງດູລູກ, ຄ່າປົວແປງຈິດໃຈ;
    - ໃຫ້ຈຳເລີຍປະຕິບັດພາງແກ່ໂຈດກ່ອນຈຳນວນໃດໜຶ່ງ;
    - ແລະອື່ນໆ.

ສານຂັ້ນຕົ້ນທີ່ໄດ້ຕັດສິນຄະດີແລ້ວ ຕ້ອງພິມຄຳຕັດສິນໃຫ້ແລ້ວ ພາຍໃນກຳນົດຊາວວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ.

**ມາດຕາ 94 ການປະຕິບັດພາງ**

ການປະຕິບັດພາງ ແມ່ນການປະຕິບັດຄຳຕັດສິນຂອງສານສ່ວນໃດສ່ວນໜຶ່ງ ກ່ອນຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດ ເພື່ອຊ່ວຍບັນເທົາຄວາມເສັຍຫາຍ, ຄວາມຈຳເປັນຮີບດ່ວນຂອງໂຈດ.

ຄຳຕັດສິນຂອງສານໃນກໍລະນີຮີບດ່ວນ ຫລືຈຳເລີຍຮັບຮູ້ການຮ້ອງຟ້ອງຂອງໂຈດ ຊຶ່ງບອກໃຫ້ຈຳເລີຍປະຕິບັດພາງສ່ວນໃດສ່ວນໜຶ່ງກ່ອນນັ້ນ ຕ້ອງສົ່ງໄປຍັງຫ້ອງການ ຫລືໜ່ວຍງານປະຕິບັດຄຳຕັດສິນຂອງສານບ່ອນກ່ຽວຂ້ອງໃນທັນໃດ ເພື່ອຈັດຕັ້ງປະຕິບັດ ເຖິງວ່າຈະມີການຂໍອຸທອນກໍຕາມ.

**ມາດຕາ 95 ຄຳຕັດສິນເປັນຂັ້ນຕົ້ນ ຊຶ່ງບໍ່ຖືກຂໍອຸທອນ**

ຄຳຕັດສິນເປັນຂັ້ນຕົ້ນຂອງສານປະຊາຊົນເມືອງ, ເທດສະບານ ແລະສານປະຊາຊົນແຂວງ, ນະຄອນ ຊຶ່ງບໍ່ຖືກຂໍອຸທອນໂດຍຄູ່ຄວາມ ຫລືບໍ່ຖືກຄັດຄ້ານໂດຍໄອຍະການປະຊາຊົນ ຕາມກຳນົດເວລາຂໍອຸທອນ ຫລືຄັດຄ້ານນັ້ນ ໃຫ້ຖືວ່າເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ຊຶ່ງຄູ່ຄວາມບໍ່ມີສິດຂໍອຸທອນ ຫລືໄອຍະການປະຊາຊົນບໍ່ມີສິດສະເໜີຄັດຄ້ານໄດ້.

## ພາກທີ VI
## ການດຳເນີນຄະດີຢູ່ສານຂັ້ນອຸທອນ

**ມາດຕາ 96 ສານປະຊາຊົນທີ່ພິພາກສາເປັນຂັ້ນອຸທອນ**

ສານປະຊາຊົນແຂວງ, ນະຄອນ ແລະສານອຸທອນ ມີສິດພິພາກສາຄະດີເປັນຂັ້ນອຸທອນ ຕາມຂໍ້ມູນຫລັກຖານ ແລະຕາມກົດໝາຍ.

### ໝວດທີ 1
### ສິດໃນການຂໍອຸທອນ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານ

**ມາດຕາ 97 ບຸກຄົນທີ່ມີສິດໃນການຂໍອຸທອນ**

ໂຈດ, ຈຳເລີຍ ຫລືບຸກຄົນທີສາມຂອງແຕ່ລະຝ່າຍ ຊຶ່ງເປັນຄູ່ຄວາມໃນຄະດີມີສິດຂໍອຸທອນຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານ.

ໄອຍະການປະຊາຊົນ ກໍມີສິດສະເໜີຄັດຄ້ານຄຳຕັດສິນຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລືບໍ່ມີເຫດຜົນພຽງພໍ.

**ມາດຕາ 98 ກຳນົດເວລາຂໍອຸທອນ ແລະສະເໜີຄັດຄ້ານ**

ຄູ່ຄວາມມີສິດຂໍອຸທອນ ແລະໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນໄດ້ພາຍໃນກຳນົດຊາວວັນ ນັບແຕ່ວັນລົງຄຳຕັດສິນ ສຳລັບຜູ້ຖືກສານຕັດສິນຊ້ອງໜ້າ ຫລື ວັນຮັບຊາບຄຳຕັດສິນເປັນຕົ້ນໄປ ສຳລັບຜູ້ຖືກສານຕັດສິນລັບຫລັງ ຫລືຖືວ່າຊ້ອງໜ້າ.

ສຳລັບການຂໍອຸທອນຄຳສັ່ງ ຫລືຄຳຊີ້ຂາດຂອງສານນັ້ນ ກຳນົດເວລາຂໍອຸທອນ ແມ່ນເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງ ຫລືຄຳຊີ້ຂາດເປັນຕົ້ນໄປ.

ຄູ່ຄວາມທີ່ຂໍອຸທອນນັ້ນ ໃຫ້ເສັຍເງິນຄ່າຂໍອຸທອນຕາມລະບຽບກົດໝາຍ.

**ມາດຕາ 99 ລະບຽບການຂໍອຸທອນ ຫລືສະເໜີຄັດຄ້ານ**

ໃນກໍລະນີທີ່ມີການຂໍອຸທອນ ຫລືສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານ ຄູ່ຄວາມ ຫລືໄອຍະການປະຊາຊົນ ຕ້ອງຍື່ນຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານຂອງຕົນ ຕໍ່ສານຂັ້ນອຸທອນ ໂດຍຜ່ານສານທີ່ໄດ້ຕັດສິນຄະດີເປັນຂັ້ນຕົ້ນນັ້ນ. ສານຂັ້ນຕົ້ນນັ້ນຕ້ອງແນະນຳໃຫ້ຜູ້ຂໍອຸທອນຊາບ ກ່ຽວກັບກຳນົດການຂໍອຸທອນ, ການຂຽນຄຳຮ້ອງຂໍອຸທອນ, ຄ່າທຳນຽມຂໍອຸທອນ ແລະສິດຕ່າງໆ ຂອງຜູ້ກ່ຽວ. ສານຂັ້ນຕົ້ນຕ້ອງຮັບຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານດັ່ງກ່າວ ເຖິງວ່າກຳນົດເວລາຂໍອຸທອນນັ້ນ ຈະໝົດແລ້ວກໍຕາມ.

ພາຍຫລັງສິ້ນສຸດກຳນົດເວລາຂໍອຸທອນ ຫລືສະເໜີຄັດຄ້ານແລ້ວ ພາຍໃນກຳນົດຊາວສາມວັນ ສານຂັ້ນຕົ້ນຕ້ອງສົ່ງຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານ ພ້ອມດ້ວຍສຳນວນຄະດີໄປຍັງສານຂັ້ນອຸທອນ ເພື່ອດຳເນີນຄະດີຕໍ່ໄປ.

ໃນກໍລະນີທີ່ສານຂັ້ນຕົ້ນຫາກບໍ່ຮັບ ຫລືແກ່ຍາວການຮັບຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານຄຳຕັດສິນຂອງສານ, ຄູ່ຄວາມ ຫລືໄອຍະການປະຊາຊົນ ມີສິດຂໍອຸທອນ ຫລືສະເໜີຄັດຄ້ານໂດຍກົງຕໍ່ສານຂັ້ນອຸທອນ.

ຫລັງຈາກກຳນົດຂໍອຸທອນໄດ້ສິ້ນສຸດແລ້ວ ຖ້າສານຂັ້ນຕົ້ນ ທີ່ໄດ້ຮັບຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານ ຫາກແກ່ຍາວເກີນກຳນົດເວລາໃນການສົ່ງສຳນວນຄະດີຂຶ້ນ ສານຂັ້ນອຸທອນຄູ່ຄວາມ ຫລືໄອຍະການປະຊາຊົນ ມີສິດສະເໜີຕໍ່ສານຂັ້ນອຸທອນ ເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.

ສານຂັ້ນອຸທອນຕ້ອງເລີ່ມພິຈາລະນາຄະດີ ຢ່າງຊ້າທີ່ສຸດສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານຄຳຕັດສິນນັ້ນ ຕ້ອງແຈ້ງຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານໃຫ້ຄູ່ຄວາມອີກຝ່າຍໜຶ່ງຊາບ ເພື່ອໃຫ້ຜູ້ກ່ຽວເຮັດຄຳແກ້ຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານ.

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນອຸທອນນັ້ນ ຄູ່ຄວາມ ແລະໄອຍະການປະຊາຊົນມີສິດໃຫ້ຄຳອະທິບາຍເປັນລາຍລັກອັກສອນ ເພື່ອໃຫ້ເຫດຜົນເພີ່ມເຕີມຕໍ່ຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານຂອງຕົນ, ໃຫ້ຂໍ້ສັງເກດກ່ຽວກັບຄຳຮ້ອງຂໍອຸທອນຂອງອີກຝ່າຍໜຶ່ງ ຫລືຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນ.

**ມາດຕາ 100 ສິດໃນການຖອນຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານ**

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນອຸທອນນັ້ນ ຄູ່ຄວາມ ແລະບຸກຄົນທີສາມໃນຄະດີ ຫລືໄອຍະການປະຊາຊົນມີສິດຖອນຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານຂອງຕົນຄືນໄດ້.

ໃນກໍລະນີມີການຖອນຄໍາຂໍອຸທອນ ຫລືຄໍາສະເໜີຄັດຄ້ານແລ້ວ ຄູ່ຄວາມ ແລະບຸກຄົນທີສາມໃນຄະດີ ຫລືໄອຍະການປະຊາຊົນ ບໍ່ມີສິດຂໍອຸທອນ ຫລືສະເໜີຄັດຄ້ານຄືນໃໝ່ອີກ.

ໃນການຖອນຄໍາຂໍອຸທອນ ຫລືຄໍາສະເໜີຄັດຄ້ານນັ້ນ ໃຫ້ອອກເປັນຄໍາຕົກລົງຂອງຄະນະສານ.

**ມາດຕາ 101 ຜົນຂອງການຍື່ນຄໍາຮ້ອງຂໍອຸທອນ**

ຄໍາຮ້ອງຂໍອຸທອນ ຫລືຄໍາສະເໜີຄັດຄ້ານ ທີ່ໄດ້ຍື່ນເຖິງສານຂັ້ນອຸທອນນັ້ນເປັນສາເຫດທີ່ພາໃຫ້ໂຈະການປະຕິບັດຄໍາຕັດສິນ ຊຶ່ງຖືກຂໍອຸທອນ ຫລືຖືກສະເໜີຄັດຄ້ານນັ້ນ ເວັ້ນເສັຍແຕ່ມີຄໍາຕັດສິນຂອງສານໃຫ້ປະຕິບັດພາງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 94 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ຂັ້ນຕອນການພິຈາລະນາຄະດີຂອງສານຂັ້ນອຸທອນ

**ມາດຕາ 102 ບຸກຄົນທີ່ເຂົ້າຮ່ວມໃນທີ່ປະຊຸມສານຂອງສານຂັ້ນອຸທອນ**

ສານຂັ້ນອຸທອນຕ້ອງຮຽກຄູ່ຄວາມມາຮ່ວມໃນທີ່ປະຊຸມສານ.

ໄອຍະການປະຊາຊົນ ກໍສາມາດເຂົ້າຮ່ວມໃນທີ່ປະຊຸມສານຂອງສານຂັ້ນອຸທອນ.

ໃນສານຂັ້ນອຸທອນນັ້ນ ຄູ່ຄວາມກໍຍັງມີສິດສະເໜີຫລັກຖານໃໝ່ເພີ່ມເຕີມກ່ອນໄອຍະການປະຊາຊົນຈະຂຶ້ນຖະແຫລງໃນທີ່ປະຊຸມສານ.

ການເປີດປະຊຸມສານຢູ່ສານຂັ້ນອຸທອນ ໃຫ້ປະຕິບັດດັ່ງດຽວກັນກັບການເປີດປະຊຸມສານຢູ່ສານຂັ້ນຕົ້ນ.

**ມາດຕາ 103 ລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນ**

ລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນ ໃຫ້ປະຕິບັດດັ່ງດຽວກັນກັບການພິຈາລະນາຄະດີຢູ່ສານຂັ້ນຕົ້ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 81 ຫາມາດຕາ 89 ຂອງກົດໝາຍສະບັບນີ້.

ພາຍຫລັງທີ່ປະທານຄະນະສານ ໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະຄະນະສານຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານໃຫ້ຜູ້ຂໍອຸທອນ ຫລືໄອຍະການປະຊາຊົນ ຜູ້ສະເໜີຄັດຄ້ານຄໍາຕັດສິນນັ້ນ ໃຫ້ເຫດຜົນກ່ຽວກັບການຂໍອຸທອນ ຫລືການສະເໜີຄັດຄ້ານຂອງຕົນ.

ໃນກໍລະນີທີ່ມີການສະເໜີຫລັກຖານໃໝ່ເພີ່ມເຕີມນັ້ນ ສານຕ້ອງແຈ້ງໃຫ້ໄອຍະການປະຊາຊົນ ແລະບັນດາຜູ້ເຂົ້າຮ່ວມໃນທີ່ປະຊຸມສານຮັບຮູ້ນໍາ. ຕໍ່ຈາກນັ້ນຈຶ່ງໃຫ້ຄູ່ຄວາມນັ້ນໃຫ້ຄໍາອະທິບາຍຕໍ່ສານ. ພາຍຫລັງທີ່ສານໄດ້ຟັງຄໍາຖະແຫລງຂອງໄອຍະການປະຊາຊົນແລ້ວ ສານຈະກ່າວປິດການໂຕ້ຖຽງ ແລະປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ.

**ມາດຕາ 104 ປະເພດຄໍາພິພາກສາຂອງສານຂັ້ນອຸທອນ**

ປະເພດຄຳພິພາກສາຂອງສານຂັ້ນອຸທອນ ມີດັ່ງນີ້:

- ບໍ່ຮັບເອົາຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍອຸທອນ;
- ຍົກເລີກຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄຳ ຕັດສິນຂອງສານຂັ້ນຕົ້ນທັງໝົດ;
- ປ່ຽນແປງຄຳຕັດສິນຂອງສານຂັ້ນຕົ້ນ ບາງສ່ວນ ຫລືທັງໝົດ ແລ້ວພິພາກສາໃໝ່;
- ລົບລ້າງຄຳຕັດສິນ ແລ້ວສົ່ງຄະດີໄປໃຫ້ສານຂັ້ນຕົ້ນຄະນະໃໝ່ ພິຈາລະນາຄືນໃໝ່ ຫລືຄະນະເກົ່າ ໃນກໍລະນີທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫລືຄຳສະເໜີຂອງໄອຍະການປະຊາຊົນ;
- ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ໂດຍບໍ່ສົ່ງໃຫ້ສານໃດສານໜຶ່ງພິຈາລະນາຄືນໃໝ່;

ຄຳພິພາກສາຂອງສານຂັ້ນອຸທອນ ເປັນຄຳພິພາກສາຂັ້ນສຸດທ້າຍທາງດ້ານຂໍ້ມູນຫລັກຖານ.

ໃນກໍລະນີທີ່ສານຂັ້ນອຸທອນ ຫາກໄດ້ສົ່ງຄະດີຄືນໃຫ້ສານຂັ້ນຕົ້ນພິຈາລະນາຕັດສິນຄືນໃໝ່ ແລ້ວການພິຈາລະນາຄະດີດັ່ງກ່າວ ໃຫ້ປະຕິບັດຕາມລະບຽບການທົ່ວໄປຂອງການດຳເນີນຄະດີຢູ່ສານຂັ້ນຕົ້ນ.

ສານຂັ້ນອຸທອນທີ່ໄດ້ພິພາກສາຄະດີແລ້ວ ຕ້ອງພິມຄຳພິພາກສາໃຫ້ແລ້ວພາຍໃນກຳນົດ ສາມສິບວັນ ນັບແຕ່ວັນລົງຄຳພິພາກສາເປັນຕົ້ນໄປ.

**ມາດຕາ 105 ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳຕັດສິນ**

ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳຕັດສິນຂອງສານຂັ້ນຕົ້ນ ມີດັ່ງນີ້ :

- ການອະທິບາຍເຫດການຂອງຄະດີບໍ່ຊັດເຈນ;
- ການນຳເອົາຫລັກຖານໃນຄະດີ ອອກມາພິຈາລະນາບໍ່ຄົບຖ້ວນ;
- ການວິນິດໄສຂອງສານ ບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ;
- ການນຳໃຊ້ກົດໝາຍບໍ່ຖືກຕ້ອງ;
- ການລະເມີດລະບຽບການດຳເນີນຄະດີແພ່ງ;
- ແລະອື່ນໆ.

## ພາກທີ VII
## ການດຳເນີນຄະດີຢູ່ສານຂັ້ນລົບລ້າງ

**ມາດຕາ 106 ສານປະຊາຊົນທີ່ພິພາກສາເປັນຂັ້ນລົບລ້າງ**

ມີແຕ່ສານປະຊາຊົນສູງສຸດເທົ່ານັ້ນ ມີສິດພິພາກສາຄະດີເປັນຂັ້ນລົບລ້າງ ແລະເປັນຂັ້ນສຸດທ້າຍທາງດ້ານກົດໝາຍ.

## ໝວດທີ 1
## ສິດໃນການຂໍລົບລ້າງແລະການສະເໜີຄັດຄ້ານ
## ຄຳພິພາກສາຂອງສານ

**ມາດຕາ 107 ບຸກຄົນ ທີ່ມີສິດໃນການຂໍລົບລ້າງ**

ໂຈດ, ຈຳເລີຍ ຫລືບຸກຄົນທີສາມ ຊຶ່ງເປັນຄູ່ຄວາມໃນຄະດີ, ໄອຍະການປະຊາຊົນມີສິດຂໍລົບລ້າງ ຫລືສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານ. ບຸກຄົນ ຫລືໄອຍະການປະຊາຊົນທີ່ຂໍລົບລ້າງ ຫລືສະເໜີຄັດຄ້ານນັ້ນ ຕ້ອງອະທິບາຍເຫດຜົນກ່ຽວກັບການຂໍລົບລ້າງ ຫລືການສະເໜີຄັດຄ້ານຂອງຕົນຕໍ່ສານ;

ຄຳຕັດສິນຂອງສານຂັ້ນຕົ້ນທີ່ບໍ່ຖືກຂໍອຸທອນ ຫລືບໍ່ຖືກສະເໜີ ຄັດຄ້ານນັ້ນ ຈະຂໍລົບລ້າງບໍ່ໄດ້.

ຄຳພິພາກສາຂອງສານຂັ້ນອຸທອນ ຊຶ່ງຖືກຢັ້ງຢືນໂດຍສານຂັ້ນລົບລ້າງນັ້ນໃຫ້ຖືວ່າເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ແລະຕ້ອງນຳມາຈັດຕັ້ງປະຕິບັດ.

**ມາດຕາ 108 ວິທີປະຕິບັດສິດໃນການຂໍລົບລ້າງ**

ຄູ່ຄວາມມີສິດຂໍລົບລ້າງ ແລະໄອຍະການປະຊາຊົນມີສິດ ສະເໜີຄັດຄ້ານຄຳພິພາກສາຂອງສານຂັ້ນອຸທອນໄດ້ ພາຍໃນກຳນົດຫົກສິບວັນ ນັບແຕ່ວັນລົງຄຳພິພາກສາ ສຳລັບຜູ້ຖືກສານຕັດສິນຊ້ອງໜ້າ ຫລືນັບແຕ່ວັນຮັບຊາບຄຳພິພາກສາເປັນຕົ້ນໄປ ສຳລັບຜູ້ຖືກສານຕັດສິນລັບຫລັງ ຫລືຖືວ່າຊ້ອງໜ້າ;

ຄູ່ຄວາມທີ່ຂໍລົບລ້າງນັ້ນ ໃຫ້ເສັຍເງິນຄ່າຂໍລົບລ້າງຕາມລະບຽບກົດໝາຍ.

ຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານນັ້ນຕ້ອງຍື່ນຕໍ່ສານປະຊາຊົນສູງສຸດ ໂດຍຜ່ານສານທີ່ໄດ້ພິພາກສາຄະດີທີ່ກ່ຽວຂ້ອງເປັນຂັ້ນອຸທອນ. ສານຂັ້ນອຸທອນນັ້ນ ຕ້ອງແນະນຳໃຫ້ຜູ້ຂໍລົບລ້າງຊາບກ່ຽວກັບກຳນົດການຂໍລົບລ້າງ, ການຂຽນຄຳຮ້ອງຂໍລົບລ້າງ, ຄ່າທຳນຽມຂໍລົບລ້າງ ແລະສິດຕ່າງໆຂອງຜູ້ກ່ຽວ. ສານຂັ້ນອຸທອນຕ້ອງຮັບຄຳຂໍລົບລ້າງເຖິງວ່າຈະກາຍກຳນົດຂໍລົບລ້າງແລ້ວກໍຕາມ.

ພາຍຫລັງທີ່ໄດ້ຮັບຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານ ແລ້ວສານຂັ້ນອຸທອນ ຕ້ອງແຈ້ງໃຫ້ຄູ່ຄວາມອີກຝ່າຍໜຶ່ງຮັບຊາບນຳ ພາຍໃນກຳນົດເຈັດວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ. ຖ້າວ່າກຳນົດເວລາຂໍລົບລ້າງ ຫລືສະເໜີຄັດຄ້ານຫາກໝົດແລ້ວ ສານຂັ້ນອຸທອນຕອ້ງສົ່ງຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານ ພ້ອມທັງສຳນວນຄະດີໄປຍັງສານປະຊາຊົນສູງສຸດ ພາຍໃນສາມວັນ.

## ໝວດທີ 2

## ຂັ້ນຕອນການພິຈາລະນາຄະດີຂອງສານຂັ້ນລຶບລ້າງ

**ມາດຕາ 109 ຂອບເຂດການພິຈາລະນາຄະດີຂອງສານຂັ້ນລຶບລ້າງ**

ສານຂັ້ນລຶບລ້າງ ພິຈາລະນາ ກ່ຽວກັບ:

- ການປະຕິບັດກົດໝາຍວ່າດ້ວຍການດຳເນີນຄະດີ;
- ການຕີຄວາມໝາຍຂອງເຫດການ;
- ການນຳໃຊ້ມາດຕາ, ກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ.

**ມາດຕາ 110 ຜົນຂອງການຍື່ນຄຳຮ້ອງຂໍລຶບລ້າງ**

ຄຳຮ້ອງຂໍລຶບລ້າງ ຫລືຄຳສະເໜີຄັດຄ້ານ ທີ່ໄດ້ຍື່ນເຖິງສານປະຊາຊົນສູງສຸດນັ້ນ ເປັນສາເຫດທີ່ພາໃຫ້ໂຈະການປະຕິບັດຄຳພິພາກສາ ຊຶ່ງຖືກຂໍລຶບລ້າງ ຫລືຖືກສະເໜີຄັດຄ້ານນັ້ນ ເວັ້ນເສັຍແຕ່ມີຄຳຕັດສິນຂອງສານ ໃຫ້ປະຕິບັດພາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 94 ຂອງກົດໝາຍສະບັບນີ້.

**ມາດຕາ 111 ການພິພາກສາຕາມສຳນວນຄະດີ**

ເຫດການຕ່າງໆ ທາງດ້ານຂໍ້ມູນຫລັກຖານໃນເນື້ອຄະດີ ຊຶ່ງສານຂັ້ນອຸທອນໄດ້ພິພາກສາລົງໄປນັ້ນໃຫ້ຖືວ່າເປັນທີ່ສິ້ນສຸດແລ້ວ.

ສານຂັ້ນລຶບລ້າງພິພາກສາຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະໄຕ່ສວນຕື່ມອີກ. ໃນກໍລະນີທີ່ຈຳເປັນ ສານຂັ້ນລຶບລ້າງຈະຮຽກຄູ່ຄວາມເຂົ້າມາຮ່ວມໃນການດຳເນີນຄະດີຢູ່ສານຂັ້ນລຶບລ້າງ ຫລືລົງກວດກາເຫດການຕົວຈິງຂອງຄະດີກໍໄດ້.

**ມາດຕາ 112 ລະບຽບການພິຈາລະນາຄະດີຢູ່ສານຂັ້ນລຶບລ້າງ**

ລະບຽບການພິຈາລະນາຄະດີຢູ່ສານຂັ້ນລຶບລ້າງ ໃຫ້ປະຕິບັດຕາມມາດຕາ 103 ຂອງກົດໝາຍສະບັບນີ້.

ສານຂັ້ນລຶບລ້າງ ຕ້ອງເລີ່ມພິຈາລະນາຄະດີຢ່າງຊ້າຫົກສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ

ພາຍຫລັງທີ່ປະທານຄະນະສານ ໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະຄະນະສານຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານໃຫ້ຜູ້ຂໍລຶບລ້າງ ຫລືໄອຍະການປະຊາຊົນຜູ້ສະເໜີຄັດຄ້ານຄຳພິພາກສານັ້ນ ໃຫ້ເຫດຜົນກ່ຽວກັບການຂໍລຶບລ້າງ ຫລືການສະເໜີຄັດຄ້ານຂອງຕົນ ໃນກໍລະນີທີ່ໄດ້ຮຽກຄູ່ຄວາມເຂົ້າມາຮ່ວມໃນທີ່ປະຊຸມສານ.

ໃນກໍລະນີ ທີ່ບໍ່ໄດ້ຮຽກຄູ່ຄວາມເຂົ້າມາຮ່ວມໃນທີ່ປະຊຸມສານ ພາຍຫລັງທີ່ຮັບຟັງການລາຍງານຂອງຜູ້ຮັບຜິດຊອບຄະດີ ແລະຄຳຖະແຫລງຂອງໄອຍະການປະຊາຊົນສູງສຸດແລ້ວ ສານຈະປະກາດປິດການປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ ຫລັງຈາກນັ້ນກໍນຳເອົາຄຳພິພາກສາອອກມາອ່ານໃນທີ່ປະຊຸມສານ.

**ມາດຕາ 113 ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ**

ປະເພດຄຳພິພາກສາຂອງສານຂັ້ນລົບລ້າງມີດັ່ງນີ້ :

- ບໍ່ຮັບຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍລົບລ້າງ ;
- ຍົກເລີກຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄຳພິພາກສາຂອງສານຂັ້ນອຸທອນທັງໝົດ;
- ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫລືທັງໝົດ ແລ້ວພິພາກສາໃໝ່;
- ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາຄືນໃໝ່ ຫລືຄະນະເກົ່າ ໃນກໍລະນີທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫລືຄຳສະເໜີຂອງໄອຍະການປະຊາຊົນ;
- ລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີໃຫ້ສານໃດສານໜຶ່ງພິຈາລະນາຄືນໃໝ່.

**ມາດຕາ 114 ການຕັດສິນຕາມຄຳພິພາກສາຂອງສານຂັ້ນ ລົບລ້າງ**

ພາຍຫລັງທີ່ສານຂັ້ນລົບລ້າງຫາກໄດ້ລົບລ້າງຄຳພິພາກສາ ແລ້ວສົ່ງໃຫ້ສານຂັ້ນອຸທອນພິພາກສາຄືນໃໝ່ນັ້ນ ການພິຈາລະນາຄະດີໃຫ້ປະຕິບັດ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 103 ຂອງກົດໝາຍສະບັບນີ້

ໃນກໍລະນີຄຳພິພາກສາຂອງສານຂັ້ນອຸທອນຄະນະໃໝ່ ຫາກໄດ້ລົງຄຳພິພາກສາບໍ່ກົງກັບຄຳພິພາກສາຂອງສານຂັ້ນລົບລ້າງນັ້ນ ເມື່ອຄູ່ຄວາມຫາກບໍ່ໄດ້ຂໍລົບລ້າງແລ້ວ ກໍໃຫ້ໄອຍະການປະຊາຊົນສູງສຸດ ສະເໜີຄັດຄ້ານຂຶ້ນສານປະຊາຊົນສູງສຸດໂດຍໜ້າທີ່.

ໃນການພິຈາລະນາຄະດີຄືນໃໝ່ນັ້ນ ຖ້າຫາກສານຂັ້ນລົບລ້າງ ຫາກໄດ້ພິພາກສາຄືເກົ່າ ແລະສົ່ງຄະດີຄືນໃຫ້ສານຂັ້ນອຸທອນເປັນເທື່ອທີ່ສອງແລ້ວ ສານຂັ້ນອຸທອນຄະນະໃໝ່ນັ້ນຕ້ອງໄດ້ປະຕິບັດຕາມຄຳພິພາກສາຂອງສານຂັ້ນລົບລ້າງນັ້ນຢ່າງເດັດຂາດ.

## ພາກທີ VIII
## ການຮື້ຟື້ນຄະດີ

**ມາດຕາ 115 ການຮັບເອົາຄະດີທີ່ຖືກຮື້ຟື້ນມາພິຈາລະນາ**

ມີແຕ່ສານປະຊາຊົນສູງສຸດເທົ່ານັ້ນ ຈຶ່ງມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຮື້ຟື້ນ.

ຄຳສັ່ງ, ຄຳຊີ້ຂາດ ຫລືຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນສາມາດຖືກຮື້ຟື້ນໄດ້.

ສານປະຊາຊົນສູງສຸດ ຈະຮັບເອົາຄະດີມາພິຈາລະນາເປັນຂັ້ນຮື້ຟື້ນໄດ້ກໍຕໍ່ເມື່ອຫາກມີຄຳສະເໜີຂອງໄອຍະການປະຊາຊົນສູງສຸດ ບົນພື້ນຖານຂໍ້ມູນຫລັກຖານໃໝ່ເທົ່ານັ້ນ.

ການຮື້ຟື້ນຄະດີ ແມ່ນດຳເນີນຕາມຄຳຮ້ອງຂໍຂອງຄູ່ຄວາມ ຫລືໂດຍໜ້າທີ່ຂອງໄອຍະການປະຊາຊົນສູງສຸດ. ການຮື້ຟື້ນຄະດີໂດຍໜ້າທີ່ຂອງໄອຍະການປະຊາຊົນສູງສຸດ ແມ່ນເພື່ອຄວາມຖືກຕ້ອງຕາມກົດໝາຍ.

### ມາດຕາ 116 ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີ

ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີ ໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫລືຫລັກຖານໃໝ່ມີດັ່ງນີ້:

1. ພະຍານໃນຄະດີໄດ້ໃຫ້ການເທັດ ຫລືຜູ້ຊ່ຽວຊານໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ ຫລືການໃຊ້ຫລັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
2. ຜູ້ພິພາກສາ ຫລືໄອຍະການປະຊາຊົນ ໄດ້ເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
3. ມີຂໍ້ມູນ ຫລືຫລັກຖານໃໝ່ກ່ຽວຂ້ອງກັບຄະດີ ທີ່ຍັງບໍ່ທັນໄດ້ສະເໜີຂຶ້ນໃນຄະດີນັ້ນ ແລະຜູ້ຮ້ອງຂໍຮື້ຟື້ນນັ້ນ ກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫລືຫລັກຖານໃໝ່ໃນເວລາຕັດສິນນັ້ນ;
4. ມີເຫດການອື່ນໆ ທີ່ຊີ້ບອກເຖິງຂໍ້ມູນຫລັກຖານໃໝ່ ຊຶ່ງສານບໍ່ໄດ້ຮູ້ໃນເວລາລົງຄຳຕັດສິນ ຫລືຄຳພິພາກສານັ້ນ.

### ມາດຕາ 117 ການຂໍຮື້ຟື້ນຄະດີ

ຄູ່ຄວາມ ຫລືບຸກຄົນທີສາມມີສິດຂໍຮື້ຟື້ນຄະດີໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫລືຫລັກຖານໃໝ່ ຕໍ່ໄອຍະການປະຊາຊົນສູງສຸດພາຍໃນກຳນົດໜຶ່ງປີ ນັບແຕ່ວັນທີ່ຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ.

ຄູ່ຄວາມທີ່ຂໍຮື້ຟື້ນຄະດີນັ້ນ ໃຫ້ເສັຍເງິນຄ່າຂໍຮື້ຟື້ນຕາມລະບຽບກົດໝາຍ.

ສານປະຊາຊົນສູງສຸດ ພິຈາລະນາເປັນຂັ້ນຮື້ຟື້ນໃນທີ່ປະຊຸມສານ ຕາມຄຳສະເໜີຮື້ຟື້ນຄະດີຂອງໄອຍະການປະຊາຊົນສູງສຸດ ແລະປະຕິບັດດັ່ງດຽວກັນກັບລະບຽບການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ.

### ມາດຕາ 118 ປະເພດຄຳພິພາກສາຂອງການຮື້ຟື້ນຄະດີ

ປະເພດຄຳພິພາກສາຂອງສານປະຊາຊົນສູງສຸດ ທີ່ພິຈາລະນາເປັນຂັ້ນຮື້ຟື້ນມີດັ່ງນີ້:

- ຍົກເລີກຄຳສະເໜີຮື້ຟື້ນຂອງໄອຍະການປະຊາຊົນສູງສຸດ;

- ລົບລ້າງຄຳຕັດສິນ ຫລືຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ແລ້ວສົ່ງສຳນວນຄະດີຄືນໃຫ້ສານຂັ້ນຕົ້ນຄະນະໃໝ່ ທີ່ມີສິດອຳນາດພິຈາລະນາຕາມລະບຽບການພິຈາລະນາຄະດີຢູ່ສານ ຂັ້ນຕົ້ນ.

## ພາກທີ IX
## ມາດຕະການບັງຄັບຂອງສານ

### ມາດຕາ 119 ການນຳໃຊ້ມາດຕະການຮີບດ່ວນຊົ່ວຄາວຂອງສານ

ສານອາດຈະນຳໃຊ້ມາດຕະການບັງຄັບໃດໜຶ່ງ ໃນກໍລະນີທີ່ຊັບສິ່ງຂອງຂັດແຍ່ງກັນນັ້ນ ຫາກຮຽກຮ້ອງໃຫ້ມີການຄຸ້ມຄອງ ຫລືຊີ້ຂາດຢ່າງຮີບດ່ວນ ເນື່ອງຈາກວ່າຊັບສິ່ງຂອງດັ່ງກ່າວຈະມີການປ່ຽນຮູບ ຫລືເສື່ອມເສຍຄຸນນະພາບກ່ອນການຕັດສິນຄະດີ.

ສານຈະອອກຄຳສັ່ງມອບສິດຄຸ້ມຄອງ ຫລືຊີ້ຂາດໃນຊັບສິ່ງຂອງນັ້ນ ໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫລືບຸກຄົນຜູ້ໃດຜູ້ໜຶ່ງກໍໄດ້.

### ມາດຕາ 120 ການນຳໃຊ້ມາດຕະການຂອງສານຕໍ່ຄົນເສັຍຈິດ

ສານອາດຈະນຳໃຊ້ມາດຕະການປິ່ນປົວຕໍ່ຜູ້ກໍ່ຄວາມເສັຍຫາຍ ຫລືຜູ້ຮັບຜິດຊອບທາງແພ່ງ ຫລືຜູ້ໃຊ້ແທນຄ່າເສັຍຫາຍທີ່ເປັນຄົນເສັຍຈິດ ກ່ອນ ຫລືພາຍຫລັງທີ່ສານໄດ້ອອກຄຳຕັດສິນ ຫລືຄຳພິພາກສາແລ້ວ ໂດຍໃຫ້ໄປປິ່ນປົວທີ່ໂຮງໝໍໂລກຈິດ ຫລືສະຖານທີ່ປິ່ນປົວສະເພາະ.

ພາຍຫລັງທີ່ໄດ້ປິ່ນປົວດີແລ້ວ ຕ້ອງນຳເອົາຜູ້ກໍ່ຄວາມເສັຍຫາຍ ຫລືຜູ້ຮັບຜິດຊອບທາງແພ່ງ ຫລືຜູ້ໃຊ້ແທນຄ່າເສັຍຫາຍນັ້ນ ມາດຳເນີນຄະດີ ຫລືນຳມາປະຕິບັດຄຳຕັດສິນ ຫລືຄຳພິພາກສາຂອງສານຕໍ່ໄປ.

### ມາດຕາ 121 ການນຳໃຊ້ມາດຕະການຂອງສານຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ

ສານຈະນຳໃຊ້ມາດຕະການຍຶດ ຫລືອາຍັດຊັບຂອງນິຕິບຸກຄົນທີ່ເປັນຜູ້ຮັບຜິດຊອບທາງແພ່ງ ຫລືຜູ້ໃຊ້ແທນຄ່າເສັຍຫາຍ ຊຶ່ງໄດ້ຖືກຍຸບເລີກກ່ອນ ຫລືພາຍຫລັງທີ່ສານໄດ້ອອກຄຳຕັດສິນ ຫລືຄຳພິພາກສາກໍໄດ້.

ເມື່ອອອກຄຳສັ່ງຍຶດ ຫລືອາຍັດຊັບໄວ້ແລ້ວ ຕ້ອງທຳການແກ້ໄຂບັນຫາດັ່ງກ່າວກັບຜູ້ທີ່ຮັບຜິດຊອບຊັບສິ່ງຂອງ ຂອງນິຕິບຸກຄົນທີ່ໄດ້ຖືກຍຸບເລີກນັ້ນໃຫ້ສຳເລັດ ໃນກຳນົດບໍ່ໃຫ້ເກີນສາມສິບວັນພາຍຫລັງທີ່ສານໄດ້ຕັດສິນເປັນຕົ້ນໄປ.

ສຳລັບການຊຳລະສະສາງໜີ້ສິນໃນກໍລະນີທີ່ວິສາຫະກິດໄດ້ລົ້ມລະລາຍນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 122 ການນຳໃຊ້ມາດຕະການຂອງສານຕໍ່ຜົວ ຫລືເມັຍ**

ສານ ອາດຈະນຳໃຊ້ມາດຕະການດ້ວຍການອອກຄຳສັ່ງຕັດເງິນເດືອນ ຫລືລາຍໄດ້ ຫລືຢຶດ ຫລືອາຍັດຊັບທີ່ຕົກເປັນພູດຂອງຜົວ ຫລືເມັຍ ເພື່ອເປັນພັນທະໃນການຈ່າຍຄ່າເບິ່ງແຍງລ້ຽງດູຜົວ ຫລືເມຍ ແລະລູກ ຜູ້ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ ທີ່ຢູ່ນຳເມັຍ ຫລືຜົວ ຕາມຄຳຕັດສິນຂອງສານ ພາຍຫລັງທີ່ມີການຢ່າຮ້າງກັນ.

**ມາດຕາ 123 ການນຳໃຊ້ມາດຕະການຂອງສານຕໍ່ເດັກ**

ສານ ຈະນຳໃຊ້ມາດຕະການດ້ວຍການອອກຄຳສັ່ງໃຫ້ຜູ້ປົກຄອງຂອງເດັກທີ່ມີຄະດີ ຊຶ່ງອາຍຸບໍ່ເຖິງສິບແປດປີ ຍົກເວັ້ນຜູ້ທີ່ໄດ້ແຕ່ງດອງຢ່າງຖືກຕ້ອງຕາມກົດໝາຍແລ້ວ:

- ຕິດຕາມການປະພຶດຂອງເດັກ;
- ຄຸ້ມຄອງ, ຄວບຄຸມເດັກໃນລະຫວ່າງການພິຈາລະນາຄະດີ;
- ນຳເອົາເດັກໄປກວດ, ປິ່ນປົວພະຍາດ;
- ສຶກສາອົບຮົມ ແລະເບິ່ງແຍງດູແລເດັກໃນເວລາພິຈາລະນາຄະດີ;
- ລາຍງານຄວາມເປັນຈິງ ລວມທັງໃຫ້ຄຳເຫັນຕໍ່ສານໃນຄະດີເດັກ;
- ບໍ່ໃຫ້ນຳເອົາເດັກໄປເຮັດວຽກງານໜັກ ຫລືວຽກອື່ນທີ່ເປັນອັນຕະລາຍຕໍ່ສຸຂະພາບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແຮງງານ.

**ມາດຕາ 124 ຜົນບັງຄັບໃຊ້ມາດຕະການຂອງສານ**

ຄຳສັ່ງຂອງສານ ກ່ຽວກັບການນຳໃຊ້ມາດຕະການຮີບດ່ວນ ຊົ່ວຄາວ ຫລືມາດຕະການບັງຄັບອື່ນໆນັ້ນ ໃຫ້ປະຕິບັດໃນທັນໃດ ເວັ້ນເສັຍແຕ່ມາດຕະການຂອງສານຕໍ່ຜົວ ຫລືເມັຍ ຊຶ່ງມີສິດອຸທອນຄຳສັ່ງນັ້ນ.

ຄຳສັ່ງດັ່ງກ່າວຈະສິ້ນສຸດລົງ ພາຍຫລັງທີ່ສານໄດ້ອອກຄຳຕັດສິນ ຫລືຄຳພິພາກສາໃຊ້ໄດ້ຢ່າງເດັດຂາດແລ້ວ. ຊັບສິ່ງຂອງທີ່ຖືກຄຸ້ມຄອງ ຫລືຊີ້ຂາດ ຫລືຢຶດ ຫລືອາຍັດຊັບດ້ວຍຄຳສັ່ງນັ້ນ ແລ້ວກໍຈະນຳມາໃຊ້ແທນຄ່າເສັຍຫາຍ ຕາມຄຳຕັດສິນ ຫລືຄຳພິພາກສາຂອງສານ.

## ພາກທີ X

## ການຮ່ວມມືສາກົນກ່ຽວກັບການດຳເນີນຄະດີແພ່ງ

**ມາດຕາ 125 ຫລັກການຮ່ວມມືສາກົນໃນການດຳເນີນຄະດີແພ່ງ**

ການດຳເນີນຄະດີແພ່ງລະຫວ່າງສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບສານຕ່າງປະເທດ ຕ້ອງປະຕິບັດຕາມຫລັກການເຄົາລົບເອກະລາດ, ອຳນາດອະທິປະໄຕຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງວຽກງານພາຍໃນຂອງກັນແລະກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະສອດຄ່ອງກັບສັນຍາທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຊັນ ຫລືໄດ້ເຂົ້າຮ່ວມ;

ໃນກໍລະນີທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະຕ່າງປະເທດ ບໍ່ໄດ້ເຊັນສັນຍານັ້ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອາດຈະຮັບເອົາຄະດີມາພິຈາລະນາ ບົນຫລັກການຮ່ວມມືຊຶ່ງກັນແລະກັນ ແຕ່ບໍ່ໃຫ້ຂັດກັບກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 126 ການດຳເນີນຄະດີລະຫວ່າງປະເທດ**

ບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຈຸດປະສົງຢາກຮ້ອງຟ້ອງບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດຢູ່ຕ່າງປະເທດ ຫລືບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດຢູ່ຕ່າງປະເທດທີ່ມີຈຸດປະສົງຢາກຮ້ອງຟ້ອງບຸກຄົນ, ອົງການຈັດຕັ້ງ ຫລືວິສາຫະກິດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນໃຫ້ປະຕິບັດຕາມສົນທິສັນຍາຮ່ວມມືທາງດ້ານຍຸຕິທຳ. ໃນກໍລະນີທີ່ບໍ່ມີສົນທິສັນຍານັ້ນ ໃຫ້ຍື່ນຄຳຮ້ອງຟ້ອງຜ່ານກະຊວງການຕ່າງປະເທດ ເພື່ອນຳສົ່ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດທີ່ຈຳເລີຍອາໃສຢູ່ພິຈາລະນາຄະດີ.

**ມາດຕາ 127 ການຮັບຮູ້ຄຳຕັດສິນຄະດີຂອງສານຕ່າງປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະປະຕິບັດຄຳຕັດສິນຄະດີຂອງສານຕ່າງປະເທດ ໂດຍຜ່ານສະຖານທູດ, ກົງສູນ ຫລືອົງການຕາງໜ້າຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢູ່ຕ່າງປະເທດ ແລະໄດ້ແປເປັນພາສາລາວ ແລະໄດ້ຮັບການຢັ້ງຢືນຈາກສານປະຊາຊົນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມກໍລະນີ ດັ່ງນີ້:

- ຄຳຕັດສິນຂອງປະເທດທີ່ເປັນພາຄີຂອງສົນທິສັນຍາ ຊຶ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄດ້ເຊັນ ຫລືໄດ້ເຂົ້າຮ່ວມ;
- ຄະດີທີ່ເກີດຂຶ້ນນັ້ນບໍ່ແຕະຕ້ອງເຖິງອະທິປະໄຕ, ບໍ່ຂັດກັບກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ຄຳຕັດສິນນັ້ນ ບໍ່ໄດ້ລະເມີດລະບຽບການພິຈາລະນາຄະດີ ແລະບໍ່ຂັດກັບລະບຽບກົດໝາຍ ກ່ຽວກັບຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 128 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກລະບຽບການຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ສານປະຊາຊົນ, ອົງການໄອຍະການປະຊາຊົນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 129 ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່ວັນ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບເລກທີ 09/90/ ສປສ ລົງວັນທີ 29 ພະຈິກ 1990 .

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ,**